JDB
ທະນາຄານຮ່ວມພັດທະນາ
Joint Development Bank

ບົດລາຍງານປະຈຳປີ 2020

ANNUAL REPORT 2020

“ເຕີບໃຫ່ຍໄປພ້ອມກັນ”
“BLOOMING TOGETHER”

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ສຳນັກງານໃຫ່ຍ ທະນາຄານຮ່ວມພັດທະນາ ຕັ້ງຢູ່
Head Quarter Location

ອາຄານເລກທີ 82, ຖະໜົນ ລ້ານຊ້າງ
Building No 82, Lanexang Ave
ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
Ban Hatsadee, Chanthabouly District, Vientiane Capital
ຕູ້ໄປສະນີ P.O. Box 3187
ໂທລະສັບ Tel: 021 - 213 531, ສາຍດ່ວນ Hotline 1499
ໂທລະສານ Fax: 021 - 213 530
Website: www.jdbbank.com.la
E-mail: info@jdbbank.la

ສາລະບານ
CONTENT

1 ຂໍ້ມູນດ້ານການເງິນໂດຍຫຍໍ້ 5
Summary of Financial Information

2 ບົດຄວາມເຫັນຂອງ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ (ທ່ານ ເອກະພັນ ພະພິທັກ) 6
Speech of the Chairman of the Board of Director of Joint Development Bank (Mr. Ekaphan PHAPHITHAK)

3 ບົດຄວາມເຫັນຂອງ ຜູ້ອຳນວຍການໃຫ່ຍ ທະນາຄານຮ່ວມພັດທະນາ (ທ່ານ ວິໄລ ສີພະພອນ) 9
Speech of the Managing Director of Joint Development Bank (Mr. Vilay SIPHAPHONE)

4 ສະພາບໍລິຫານ 12
Excutive Board

5 ຄະນະອຳນວຍການ 14
Directors

6 ຄະນະກຳມະການ ກວດກາພາຍໃນ ທະນາຄານຮ່ວມພັດທະນາ 15
Audit Committee of the Joint Development Bank

7 ຄະນະກຳມະການກວດສອບ ຂອງສະພາບໍລິຫານ ທະນາຄານຮ່ວມພັດທະນາ 16
Internal Audit Committee of the Joint Development Bank's Executive Board Committee

8 ທີ່ປຶກສາ ທະນາຄານຮ່ວມພັດທະນາ 17
Advisory Of The Joint Development Bank

9 ໂຄງຮ່າງການຈັດຕັ້ງ 18
Organizational Structure

10 ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ 2020 19
Business Operation Summary 2020

11 ວຽກງານສິນເຊື່ອ 26
Credit work

12 ວຽກງານຊ່ວຍເຫຼືອສັງຄົມ 27
Social Supporting Work

13 ບົດລາຍງານຂອງນັກກວດສອບອິດສະຫຼະ 31
Report of Independent Auditor (Laos and English)

14 ການເຄື່ອນໄຫວ ກິດຈະກຳຕ່າງ ຂອງທະນາຄານຮ່ວມພັດທະນາ 111
Activities of Joint Development Bank

15 ໜ່ວຍບໍລິການຕ່າງໆ 114
Service Units

16 ຜະລິດຕະພັນ ຕ່າງໆ ຂອງທະນາຄານຮ່ວມພັດທະນາ 118
Products of Joint Development Bank

JDB
ທະນາຄານຮ່ວມພັດທະນາ

“ຂ້າພະເຈົ້າ ໃນນາມ ປະທານສະພາບໍລິຫານ
ທະນາຄານຮ່ວມພັດທະນາ
ຂໍສະແດງຄວາມຂອບໃຈເປັນຢ່າງສູງ
ມາຍັງບັນດາທ່ານ ແລະ ພະນັກງານທຸກຄົນ”

ທ່ານ ເອກະພັນ ພະພິທັກ
MR. EKAPHAN PHAPHITHACK

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ
Chairman Of The Board Of Directors Of
Joint Development Bank.

JDB
ທະນາຄານຮ່ວມພັດທະນາ

ປິດປະກອບຄຳເຫັນ

Speech of Mr. Ekaphan PHAPHITHACK
Chairman of the Executive Board of Joint Development Bank

ທ່ານ ເອກະພັນ ພະພິທັກ
MR. EKAPHAN PHAPHITHACK

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ
Chairman Of The Board Of Directors Of Joint Development Bank.

“ຂ້າພະເຈົ້າ ໃນນາມ ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງບັນດາທ່ານ ແລະ ພະນັກງານທຸກຄົນ ທີ່ໄດ້ທຸ້ມເທແຮງກາຍ, ແຮງໃຈ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ ຢ່າງຫ້າວຫັນ.”

“ As the Chairman of the Executive Management Board of the Joint Development Bank (JDB), I would like to express my sincere appreciation to our employees and everyone for the outstanding efforts you have actively contributed, physically and mentally, to fulfil your duties “

ຂ້າພະເຈົ້າ ໃນນາມ ປະທານສະພາບໍລິຫານທະນາຄານ ຮ່ວມພັດທະນາ (JDB) ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງບັນດາທ່ານ ແລະ ພະນັກງານ ທຸກຄົນ ທີ່ໄດ້ທຸ້ມເທແຮງ ກາຍ, ແຮງໃຈ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ ຢ່າງ ຫ້າວຫັນ. ໃນປີ 2020 ເຖິງວ່າ ສະພາບເສດຖະກິດຂອງໂລກ ມີການຜັນແປຢ່າງສັບສົນ ມີການແກ້ງແຍ້ງແຂ່ງຂັນ, ມີສົງຄາມ ການຄ້າລະຫວ່າງ ປະເທດມະຫາອຳນາດ, ໄພຂົ່ມຂູ່ທາງທຳມະ ຊາດ ແລະ ການລະບາດຂອງໄວລັດໂຄວິດ-19 (COVID-19) ເຊິ່ງເປັນປັດໃຈ ເຮັດໃຫ້ເສດຖະກິດໂລກ ມີການສະລໍຕົວ ແລະ ໄດ້ຮັບຜົນກະທົບພໍສົມຄວນ.

As the Chairman of the Executive Management Board of the Joint Development Bank (JDB), I would like to express my sincere appreciation to our employees and everyone for the outstanding efforts you have actively contributed, physically and mentally, to fulfil your duties. In 2020, there has been global economic fluctuations and competition, trade war among the most powerful countries, threats from natural disasters and the COVID-19 pandemic, which were key factors that contributed to the global economic downturn and have had a major impact on economies worldwide.

ເຖິງຢ່າງໃດກໍ່ຕາມ, ຂ້າພະເຈົ້າ ກໍໄດ້ຕັດສິນໃຈສູງຫັນ ວິກິດໃຫ້ເປັນໂອກາດ ເພື່ອບັນລຸຜົນສຳເລັດຮ່ວມກັນ ທະນາຄານ ຮ່ວມພັດທະນາ ສາມາດປະຕິບັດໄດ້ລື່ນຄາດໝາຍທີ່ຕັ້ງໄວ້ຢ່າງໜ້າ ເຫຼື່ອໃຈ.

Nevertheless, I have made a conscious decision to turn crisis into opportunity in order to achieve joint success, and JDB’s performance has been remarkably satisfactory and exceeded our planned targets

ການລະດົມທຶນເງິນຝາກ ຈາກລູກຄ້າ, ບັນດາຫ້າງຮ້ານ ຕ່າງໆ ທັງບຸກຄົນ ແລະ ນິຕິບຸກຄົນ; ການນຳໃຊ້ແຫຼ່ງທຶນຕ່າງໆ ໄດ້ປ່ອຍສິນເຊື່ອ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມກໍຄື ການກໍ່ສ້າງໂຄງລ່າງພື້ນຖານ ຂອງປະເທດ, ໂຄງການພັດທະນາຊົນ ນະບົດ, ເຂື່ອນໄຟຟ້ານ້ຳຕົກ, ຕາຂ່າຍໄຟຟ້າ, ສົ່ງເສີມການຜະ ລິດດ້ານກະສິກຳ ລ້ຽງສັດ-ປູກຝັງ ໃຫ້ເປັນສິນຄ້າ, ໃຫ້ສິນເຊື່ອ ແກ ພະນັກງານ ແລະ ສິນເຊື່ອ ເພື່ອການສຶກສາ ແລະ ການຄຶນກຳ ໄລໃຫ້ລູກຄ້າ (ແຈກລົດໃຫຍ່ ໃຫ້ລູກຄ້າຜູ້ໂຊກດີ).

This includes deposit mobilization from customers, retailers, both individuals and legal entities; using different sources of funding; loan disbursement for socio-economic development including infrastructure construction in the country, rural development projects, hydropower dams, power grid, commercial agriculture (livestock and crops) promotion; loan for government officials and educational loan; as well as customer loyalty program (car giveaways to the lucky draw customer).

ເຊິ່ງທັງໝົດນີ້ ແມ່ນການຕ້ຳຕັດສິນໃຈຂອງຜູ້ບໍລິ ຫານ ທະນາຄານຮ່ວມພັດທະນາ ເພື່ອສົ່ງເສີມໃຫ້ເສດຖະກິດຂອງ ສປປ ລາວ ມີຄວາມເຂັ້ມແຂງ ເຮັດໃຫ້ລູກຄ້າ ມີຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈ ໃຫ້ການສະໜັບສະໜູນ ທະນາຄານຮ່ວມພັດ ທະນາ ຕະຫຼອດມາ. ຍ້ອນໄດ້ຮັບຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈ ຈາກສັງຄົມ ຈຶ່ງເຮັດໃຫ້ຕາໜ່າງການບໍລິການ ທະນາຄານຮ່ວມພັດ ທະນາ ໄດ້ມີການຂະຫຍາຍຕົວ ເຕີບໃຫຍ່ຂຶ້ນໄປເລື້ອຍໆ.

These are the results of a deliberate decision-making by the management of JDB in order to strengthen the economy of Lao PDR, as well as building trust and confidence among our customers who supported JDB throughout the years. The trust and confidence from the public have resulted in the constant growth and the expansion of JDB’s service coverage.

ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມມາໂດຍຕະຫຼອດ ເຊັ່ນ: ການຊ່ວຍເຫຼືອປຸກສ້າງໂຮງຮຽນ ໃນເຂດຫ່າງໄກສອກຫຼີກ ແລະຊ່ວຍເຫຼືອຜົນກະທົບຈາກໄພທຳມະຊາດ ແລະ ໄຂຜົນກະທົບ ການແຜ່ລະບາດຂອງພະຍາດ COVID-19 ເຊິ່ງມັນສະແດງເຖິງ ຜົນງານ ຂອງທະນາຄານຮ່ວມພັດທະນາ ທີ່ໄດ້ທຸ້ມເທສະຕິປັນຍາ ເຂົ້າໃນການພັດທະນາປະເທດຊາດ ກໍຄືສັງຄົມ ແລະ ບຸກຄະລາ ກອນ ໃຫ້ມີຄວາມຮູ້ ຄວາມສາມາດ, ພັດທະນາທະນາຄານ ໃຫ້ ມີການເຕີບໃຫຍ່ ຂະຫຍາຍຕົວ ຢ່າງບໍ່ຢຸດຢັ້ງ.

We have constantly contributed to supporting the society, such as supporting school construction in remote areas, helping those affected by natural disasters and those affected by COVID-19 pandemic. This highlights JDB's dedication and our contribution towards national, social and human resource development, strengthening personnel's capacity, developing the bank while ensuring that the bank can continue to grow constantly.

ໃນປີ 2020 ເປັນປີທີ່ມີຄວາມທ້າທາຍຫຼາຍ ສຳລັບ ທະນາຄານຮ່ວມພັດທະນາ (JDB), ຂ້າພະເຈົ້າ ພ້ອມດ້ວຍ ຜູ້ ບໍລິຫານທຸກລະດັບ ຕະຫຼອດຮອດພະນັກງານ ທຸກຄົນ ໄດ້ ຮ່ວມກັນ ພັດທະນາ ຄວາມຮູ້, ແນວຄິດ, ທັດສະນະຄະຕິ ພ້ອມ ຮັບຟັງຄຳເຫັນ ເພື່ອປັບປຸງແກ້ໄຂ ແລະ ຂໍສັນຍາວ່າ: ຂ້າພະ ເຈົ້າ ຈະບໍລິຫານ ແລະ ບໍລິການ ທາງດ້ານການເງິນທີ່ຄົບວົງຈອນ ໃຫ້ມີຄວາມທັນສະໄໝ, ມີຄວາມວ່ອງໄວ, ມີຄຸນນະພາບເພື່ອ ຕອບສະໜອງຕາມຄວາມຕ້ອງການ ຂອງກຸ່ມລູກຄ້າ ແລະ ໃສ່ໃຈ ການບໍລິການເປັນຫຼັກ ເພື່ອຍົກລະດັບຊື່ສຽງຂອງທະນາຄານ JDB ໃຫ້ໄດ້ມາດຕະຖານສາກົນ ເປັນທີ່ຍອມຮັບ ຂອງຄົນທົ່ວ ສັງຄົມ ທຸກລະດັບ ໃນຂົງເຂດອາຊ່ຽນ ແລະ ສາກົນ ເທື່ອລະກ້າວ.

2020 is a very challenging year for JDB. I have been working together with our management at all level, as well as our employees, to develop ideas, knowledge, perspectives, while being willing to listen to all opinions in order to find solutions for improvement. I promise that I will continue to manage and provide comprehensive financial services that are modernized, swift and of high quality to meet the needs of our clients while concentrating on high service attentiveness, in order to enhance JDB's reputation to meet international standard, to become widely recognized by the public at all level, and to consequently become a regionally and internationally recognized bank.

ນັກທຸລະກິດ ພາຍໃນ ແລະ ຕ່າງປະເທດ, ລູກຄ້າ, ຜູ້ບໍລິຫານທຸກລະດັບ, ພະນັກງານທັງໝົດ ໃນທົ່ວປະເທດ ຈົ່ງ ມີສຸຂະພາບເຂັ້ມແຂງ, ມີອາຍຸຍືນຍາວ ມີຜົນສຳເລັດໃນການປະ ຕິບັດໜ້າທີ່ວຽກງານ ແລະ ມີຄວາມຜາສຸກ ຢູ່ໃນຊີວິດຂອງທ່ານ ຕະຫຼອດໄປ.

Lastly, I would like to convey my best wishes to the Party and Government leaders, local and international businesses, customers, the management at all level and all employees nationwide – I wish you good health, prosperity and success in your career, and wishing you a lifetime of happiness.

ປະທານສະພາບໍລິຫານທະນາຄານຮ່ວມພັດທະນາ

ທ່ານ ເອກະພັນ ພະພິທັກ

Chairman of the Executive Management Board
Joint Development Bank

JDB
ທະນາຄານຮ່ວມພັດທະນາ

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE

ຜູ້ອຳນວຍການໃຫ່ຍ ທະນາຄານຮ່ວມພັດທະນາ.
Director General of Joint Development Bank

“ ໂສມໜ້າໃໝ່ຂອງ ທະນາຄານຮ່ວມພັດທະນາ JDB ”

ໂດຍປະຕິບັດຕາມນະໂຍບາຍ ແລະ ທິດຊີ້ນຳຂອງສະພາບໍລິຫານເພື່ອສືບຕໍ່ຫັນທະນາຄານຮ່ວມພັດທະນາ (JDB) ໃຫ້ເປັນໜຸ່ມຄື: ການກໍ່ສ້າງບຸກຄະລາກອນ ລຸ້ນສືບທອດຂຶ້ນມາເປັນຜູ້ບໍລິຫານເພື່ອເຮັດໃຫ້ທະນາຄານ JDB ກາຍເປັນທະນາຄານ Digital Banking ທີ່ທັນຍຸກທັນສະໄໝໄດ້ມາດຕະຖານສາກົນ ແລະ ປະສົບຜົນສຳເລັດໂດຍການບໍລິການລູກຄ້າຂອງຕົນ ຕາມ ມາດຕະຖານ ISO 9001: 2015.

In accordance with the Executive Management Board’s policy and directive to continue to rejvenate the Joint Development Bank (JDB) to become younger by mentoring and developing successors of younger generation to be in the Management in order to enable JDB to provide digital banking aligned with modernization and international standard, and succeed in providing services to its customers in line with ISO 9001:2015 standard.

ໃນສົກປີ 2020 ນີ້ ກອງປະຊຸມຜູ້ຖືຮຸ້ນໄດ້ຕົກລົງປັບປຸງລະບົບກົງຈັກການຈັດຕັ້ງນັບແຕ່ຂັ້ນສະພາບໍລິຫານລົງມາຫາຂັ້ນຄະນະຜູ້ບໍລິຫານຕະຫຼອດເຖິງພະນັກງານ ທຸກຖ້ວນໜ້າ, ເພື່ອຊີ້ນຳນຳພາ ການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນ ການດຳເນີນທຸລະກິດ ປະຈຳປີໃຫ້ປະກົດຜົນເປັນຈິງ ແລະ ເພື່ອ ບຸກທະລຸເປົ້າໝາຍ ຂອງການປະຕິບັດຕົວເລກ KPI ຂອງທຸກ ຂະແໜງການທຸລະກິດທີ່ສ້າງລາຍຮັບ ແລະ ຜົນກຳໄລ ແກ່ທະ ນາຄານ JDB.

In the 2020 fiscal year, it has been agreed in the shareholders’ meeting to improve the organizational structure from the Executive Management Board level down to the Directors level, as well as among employees at all level. This is to guide the implementation of the Annual Strategy and Business Operation Plan, and to breakthrough and achieve planned targets in all KPI of every business sector that generates revenue and profit for JDB.

ບົດຄຳເຫັນຂອງ ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ ປະຈຳປີ 2020

Preamble by Mr. Vilay Siphaphone
Managing Director, Joint Development Bank, 2020

ໃນສົກປີ 2020 ນີ້ ເຫັນວ່າ ປະຕິບັດໄດ້ລື່ນແຜນການປີທີ່ວາງໄວ້ ຢ່າງກ້າວກະໂດດ ເປັນທີ່ເພິ່ງພໍໃຈຂອງຄະນະຜູ້ບໍລິຫານ ແລະ ພະນັກງານ ທຸກຄົນ ພາຍໃນທະນາຄານ ແລະ ເປັນການສ້າງຜົນງານເພື່ອຕ້ອນຮັບວັນສ້າງຕັ້ງທະນາຄານຮ່ວມພັດທະນາ ຄົບຮອບ 31 ປີ (ແຕ່ວັນທີ 3 ຕຸລາ 1989 - 3 ຕຸລາ 2020).

In the fiscal year 2020, we have exceeded our planned targets in leaps and bounds, while this satisfaction is shared among the Management and all employees within the bank. This is a milestone achievement that has contributed to the 31st anniversary of the establishment of JDB (3 October 1989 – 3 October 2020).

ປັດຈຸບັນ ທະນາຄານ JDB ມີໜ່ວຍບໍລິການ ແລະ ບູດບໍລິການ ທັງໝົດ 62 ຈຸດ ບໍລິການໃນທົ່ວປະເທດ ແລະ ມີແຜນຂະຫຍາຍຕາໜ່າງການບໍລິການອີກສູ່ເຂດຊຸມຊົນເສດຖະກິດເພື່ອບໍລິການລູກຄ້າຂອງຕົນໃຫ້ທົ່ວເຖິງເພື່ອສ້າງຄວາມສະດວກສະບາຍແລະຕອບສະໜອງຄວາມຕ້ອງການຂອງສັງຄົມເຊັ່ນ:ການເບີກຖອນເງິນສົດ, ການໂອນຊຳລະສະສາງ ພາຍໃນ ແລະ ຕ່າງປະເທດ;ໄດ້ປ່ອຍສິນເຊື່ອເພື່ອຊຸກຍູ້ສົ່ງເສີມທຸລະກິດລາຍໃຫຍ່ ໂຄງການກໍ່ສ້າງຕ່າງໆທີ່ຕິດພັນກັບໂຄງການຂອງລັດຖະບານ,ສົ່ງເສີມຜູ້ປະກອບການ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME). ນອກຈາກນັ້ນ ຍັງມີສິນເຊື່ອນະໂຍບາຍຫັນຊັບເປັນທຶນ ແລະ ນະໂຍບາຍສິນເຊື່ອ ໃຫ້ແກ່ພະນັກງານ, ກຳມະກອນຕາມໂຮງຈັກໂຮງງານຕ່າງໆໂດຍບໍ່ມີຫຼັກຊັບຄ້ຳປະກັນສຳຫຼັບຜູ້ມີລາຍຮັບເບີກຈ່າຍເງິນເດືອນຜ່ານບັນຊີຂອງທະນາຄານ JDB ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ພ້ອມດຽວກັນນີ້ ທະນາຄານຮ່ວມພັດທະນາຍັງປ່ອຍສິນເຊື່ອເຂົ້າໃນໂຄງການຕ່າງໆ ເຊັ່ນ:ໂຄງການເຂື່ອນໄຟຟ້າ ແລະ ໂຄງການຂອງລັດຖະບານ ແຫ່ງ ສປປ ລາວ.

Currently, JDB has a total of 62 service units and service booths nationwide, and plan to expand the service coverage to economically vibrant zone in order to serve and reach its customers, and provide convenient services to meet the needs of the public, such as cash withdrawal, domestic and international transfers and payment. JDB also offers loans to support large businesses in construction projects and government-related projects, and to support small and medium enterprises (SMEs). In addition, JDB also offers property capitalization loan, and loans for government officials and factory workers without collaterals among those who receive their payroll disbursement via JDB and BCEL bank accounts. Moreover, JDB also finances large projects such as hydropower projects and the projects of the government of Lao PDR.

ຂ້າພະເຈົ້າຂໍຕາງໜ້າໃຫ້ແກ່ຄະນະຜູ້ບໍລິຫານພ້ອມດ້ວຍພະນັກງານທຸກຄົນ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງຂໍອວຍພອນໄຊອັນປະເສີດໃຫ້ແກ່ລູກຄ້າທີ່ມາໃຊ້ບໍລິການທຸກໆທ່ານຈົ່ງປະສົບຜົນສຳເລັດ ຕໍ່ໜ້າທີ່ການງານຂອງທ່ານ ປາສະຈາກພະຍາດໂລຄາ ແລະ ສຸຂະພາບແຂງແຮງດີ.

On behalf of the directors, management and all of our employees, I would like to extend my sincere gratitude and appreciation to all customers who have been using our services and I would like to wish you all great success in your career and wish you good health and wellbeing.

JDB

ທະນາຄານຮ່ວມພັດທະນາ

“ ເຕີບໃຫຍ່ໄປພ້ອມກັນ ”

“ BLOOMING TOGETHER ”

ສະພາບໍລິຫານ

ທ່ານ ເອກະພັນ ພະພິທັກ
Mr. Ekaphan PHAPHITHACK
ປະທານສະພາບໍລິຫານ
Chairman Of The Board Of Directors

ທ່ານ ສຸນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ຮອງປະທານ ສະພາບໍລິຫານ
Vice chairman of board of directors

ທ່ານ. ວິໄລ ສິພະພອນ
Mr. Vilay SIPHAPHONE
ສະມາຊິກ ສະພາບໍລິຫານ
Board Member

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
Mr. Bounsavang PHILASAYPHITHAK
ສະມາຊິກ ສະພາບໍລິຫານ
Board Member

Executive Board

ທ່ານ ນາງ ພອນສະໄໝ ສຸກຂະຜົນ
Ms. Phonesamay SOUKHAPHON
ສະມາຊິກ ສະພາບໍລິຫານ
Board Member

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ສະມາຊິກ ສະພາບໍລິຫານ
Board Member

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ສະມາຊິກ ສະພາບໍລິຫານ
Board Member

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHUNXAY
ສະມາຊິກ ສະພາບໍລິຫານ
Board Member

ທ່ານ ບຸນຊຸ່ມ ສີສະຫວັດ
Mr. Bounsoum SISAVAT
ສະມາຊິກ ສະພາບໍລິຫານ
Board Member

ຄະນະອຳນວຍການ
Directors

ທ່ານ ວິໄລ ສິພະພອນ
Mr. Vilay SIPHAPHONE
ຜູ້ອຳນວຍການໃຫ່ຍ
Managing Director

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHUNXAY
ຮອງຜູ້ອຳນວຍການໃຫ່ຍ
Deputy Director

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ຮອງຜູ້ອຳນວຍການໃຫ່ຍ
Deputy Director

ທ່ານ ຄຳຊຸ ຢ່າງ
Mr. Khamsu YANG
ຮອງຜູ້ອຳນວຍການໃຫ່ຍ
Deputy Director

ທ່ານ ນາງ ພອນສະໄໝ ສຸກຂະພົນ
Ms. Phonesamay SOUKHAPHON
ຮອງຜູ້ອຳນວຍການໃຫ່ຍ
Deputy Director

ທ່ານ ຈັນຊະນະ ສິງຫາວົງ
Mr. Chansana SINGHAVONG
ຮອງຜູ້ອຳນວຍການໃຫ່ຍ
Deputy Director

ທ່ານ ວິລັນເດດ ໄວຍະສົມສັກ
Mr. Vilandeth VAYASOMSACK
ຮອງຜູ້ອຳນວຍການໃຫ່ຍ
Deputy Director

ຄະນະກຳມະການ ກວດກາ ພາຍໃນ ທະນາຄານຮ່ວມພັດທະນາ

Audit Committee Of The Joint Development Bank

ທ່ານ ສຸນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ປະທານ ຄະນະກຳມະການ ກວດກາພາຍໃນ
Chairman of he Internal Audit Committee

ທ່ານ ວິສຸດ ບົວສີສະອາດ
Mr. Visoud BOUASISAARD
ຄະນະກຳມະການ
Committee's member

ທ່ານ ຖາວອນ ອ້ວນມາລາ
Mr. Thavone OUANMALA
ຄະນະກຳມະການ
Committee's member

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ຄະນະກຳມະການ
Committee's member

ຄະນະກຳມະການກວດສອບ ຂອງ ສະພາບໍລິຫານ ທະນາຄານຮ່ວມພັດທະນາ

Internal Audit Committee Of The Joint Development Bank's Executive Board Committee

ທ່ານ ບຸນຊຸ່ມ ສີສະຫວັດ
Mr. Bounsoum SISAVAT
ປະທານ ຄະນະກຳມະການ ກວດສອບ
Chairman of inspection Committee

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
Mr. Bounsavang PHILASAYPHITHAK
ຮອງປະທານ ຄະນະກຳມະການກວດສອບ
Vice-Chairman of inspection Committee

ທ່ານ ປອ. ບົວອອນ ຈັນທະນິເລີດ
Mr. PhD. Bouavone CHANTHANILEUTH
ຄະນະກຳມະການ
Committee's member

ທ່ານ ພູໄຊຊະນະ ໄຊສົມບັດ
Mr. Phousaysana SAYSOMBATH
ຄະນະກຳມະການ
Committee's member

ທີ່ປຶກສາ ທະນາຄານຮ່ວມພັດທະນາ
Advisory Of The Joint Development Bank

ດຣ. ວິວັດ ກິດຕິພົງໂກสีม
Dr. Vivat KITTIPHONGKOSOL
ປະທານທີ່ປຶກສາດ້ານເສດຖະກິດ
Head of Economic Advisors

ທຸກຜົນສຳເລັດ ແມ່ນມາຈາກການເອົາໃຈໃສ່ ທຸກລາຍລະອຽດດ້ວຍຄວາມຮັບຜິດຊອບສູງ, ເປັນມືອາຊີບຂອງ ທີມງານຈະພາໃຫ້ອົງກອນປະສົບຜົນສຳເລັດ ແລະ ຕາມເປົ້າໝາຍ ເພື່ອໃຫ້ເປັນທະນາຄານທີ່ທັນສະໄໝ ແລະ ໃຫ້ ບໍລິການທີ່ດີເລີດ ແກ່ສັງຄົມຕະຫຼອດໄປ

All successful is from the finicky work with the high responsibility. With the good team Work and professional guaranteed will escort us to success and achieve the goal to become the modernized bank and best services to the society

ທະນາຄານຮ່ວມພັດທະນາ

Financial Highlight

Mio LAK

	2012	2013	2014	2015	2016	2017	2018	2019	2020
Asset	679,121	1,050,539	1,079,827	1,613,295	2,356,382	2,889,413	3,632,186	5,018,043	7,679,049
Deposit to customers	469,978	683,339	690,943	1,125,293	1,873,694	2,356,742	2,925,232	4,240,095	5,945,355
Loan	258,959	350,160	513,024	782,067	1,272,882	1,913,425	2,190,461	3,314,709	4,595,516



	2012	2013	2014	2015	2016	2017	2018	2019	2020
Revenues	74,140	70,155	116,952	162,523	230,949	308,455	278,890	356,325	505,037
Expenses	64,381	68,592	110,366	159,370	225,784	302,177	271,052	316,663	419,353
Profit	9,760	1,563	6,586	3,143	5,166	6,278	7,838	39,662	85,684



ໂຄງຮ່າງການຈັດຕັ້ງ
Organization chart 2020

ທະນາຄານຮ່ວມພັດທະນາ

ໂຄງຮ່າງການຈັດຕັ້ງ
ທະນາຄານຮ່ວມພັດທະນາ

ເລກທີ: 056 /ທຄຮ.2021
ນະຄອນຫຼວງວຽງຈັນ, ວັນທີ: 29 JAN 2021



ທະນາຄານຮ່ວມພັດທະນາ
ຜູ້ອຳນວຍການໃຫຍ່

ທ່ານ ວິໄລ ສີພະອອນ

ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ 2020
Business Operation Summary 2020

JDB
ທະນາຄານຮ່ວມພັດທະນາ
Joint Development Bank

I. ສະພາບການລວມ

ສະພາບແວດລ້ອມຕ່າງໆ ທີ່ເກີດຂຶ້ນຂອງໂລກໃນປີ 2020 ເຫັນວ່າ ຍັງມີຄວາມຂັດແຍ່ງທາງດ້ານການຄ້າ ລະຫວ່າງ ປະເທດມະຫາອຳນາດ ແລະ ຜົນກະທົບຂອງການແຜ່ລະບາດຂອງພະຍາດ COVID-19 ທີ່ແຜ່ລາມໄປທົ່ວໂລກທຸກສາຍການບິນ ໃນທົ່ວໂລກ ໄດ້ຖືກຢຸດສະຫງັກ, ອຸດສາຫະກຳການທ່ອງທຽວ ໄດ້ຮັບຜົນກະທົບຢ່າງໜັກໜ່ວງ ແລະ ຜົນກະທົບຈາກໄພທຳມະຊາດສ້າງຄວາມເສຍຫາຍແກ່ຊັບສິນຂອງປະຊາຊົນ ແລະ ຂອງລັດ, ເຊິ່ງໄດ້ສົ່ງຜົນກະທົບ ຕໍ່ເສດຖະກິດໂລກ ໃນວົງກ້ວາງ, ເສດຖະກິດໂລກ ມີທ່າອ່ຽງທົດຖອຍ ຈາກ 3,70% ເປັນ 3,50% ໃນປີ 2020 ຕາມການເປີດເຜີຍຂອງກອງທຶນການເງິນສາກົນ (IMF) ເຊິ່ງຈະເປັນອຸປະສັກ ໃຫ້ແກ່ການດຳເນີນທຸລະກິດ ຂອງອຸດສາຫະກຳທະນາຄານ ເປັນສິ່ງທ້າທາຍ ສຳລັບປະເທດດ້ອຍພັດທະນາ ແລະ ປະເທດກຳລັງພັດທະນາເນື່ອງຈາກວ່າປະເທດທີ່ພັດທະນາແລ້ວ ໄດ້ປັບອັດຕາດອກເບ້ຍເພີ່ມຂຶ້ນ.

ສຳລັບ ສປປ ລາວ ການຂະຫຍາຍຕົວທາງດ້ານເສດຖະກິດ ຍັງສືບຕໍ່ຂະຫຍາຍຕົວ ໃນອັດຕາທີ່ຕ່ຳກວ່າ ໃນຊຸມປີຜ່ານມາ ເນື່ອງຈາກການພົບບັນຫາຄວາມຫຍຸ້ງຍາກທາງດ້ານການເງິນ - ງົບປະມານ ສົ່ງຜົນເຮັດໃຫ້ສະຖຽນລະພາບທາງດ້ານການເງິນ ຍັງບໍ່ທັນເຂັ້ມແຂງ ນອກຈາກນັ້ນ, ສປປ ລາວ ຍັງເປັນປະເທດໜຶ່ງ ທີ່ມີການແຜ່ລະບາດຂອງພະຍາດ COVID-19 ເຊິ່ງໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມຕໍ່ການຈັດຕັ້ງປະຕິບັດໂດຍສະເພາະແມ່ນຂະແໜງການບໍລິການ ແລະ ບັນດາຂະແໜງທີ່ຕິດພັນກັບ ວຽກງານ - ຂະແໜງການ ບໍລິການທ່ອງທ່ຽວ ເປັນຕົ້ນແມ່ນ ຂະແໜງອຸດສາຫະກຳ, ກະສິກຳ, ການຄ້າຕ່າງປະເທດ, ການລົງທຶນ ແລະ ພາກການເງິນ-ເງິນຕາ ເຮັດໃຫ້ແຜນພັດທະນາເສດຖະກິດ-ສັງຄົມ ຫຼຸດຄາດໝາຍ ໂດຍບໍ່ສາມາດບັນລຸຕາມແຜນການ, ສົມທຽບໃສ່ປີຜ່ານມາ ຄື: ຢູ່ໃນລະດັບ 6.40% ເຊິ່ງປີຜ່ານມາ 6.50% ຍ້ອນວ່າ ໃນປີຜ່ານມາ ລັດຖະບານ ໄດ້ມີການປັບປຸງຫຼາຍດ້ານ, ໄດ້ກວດກາຄືນບັນດາໂຄງການລົງທຶນຂອງລັດ ແລະ ຂອງເອກະຊົນ ທັງບຸກຄົນພາຍໃນ ແລະ ຕ່າງປະເທດ ໂດຍມີບາງໂຄງການ ກໍໄດ້ຖືກຍົກເລີກ ຍ້ອນບໍ່ມີເງື່ອນທຶນພຽງພໍ, ສະພາບການເງິນຂອງທຸລະກິດຕ່າງໆ ຝືດເຄືອງ ແລະ ບັນຫາອື່ນໆ, ທັງໝົດນັ້ນ ມັນກະທົບໂດຍກົງຕໍ່ການດຳເນີນທຸລະກິດຂອງທະນາຄານ.

I. Overview

The global situation in 2020 has been faced with trade conflicts among the most powerful countries and the global pandemic of COVID-19 affecting countries around the world, causing airlines flight suspension worldwide, with a severe impact on the tourism industry. Natural disasters have also resulted in loss of assets of the people and the government, with a major impact on global economy. The global economy is anticipated to plunge into recession from 3.70% to 3.50% in 2020, according to the International Monetary Fund (IMF), which will hinder business operations in the banking industry and will impose a challenge among the least-developed and developing countries as developed countries have raised their interest rates.

Lao PDR's economic growth still continues at a slower rate compared to previous years due to fiscal and budget constraints, resulting in weakened financial stability. Moreover, Lao PDR is among the countries affected by COVID-19 outbreak which has a direct and indirect impact on the operation especially in the service sector and tourism-related sector such as industry, agriculture, foreign trade, investment and fiscal-monetary. This has affected the national socio-economic development plan which did not meet its targets and could not achieve the planned targets compared to previous year, at 6.40% compared to previous year at 6.50%. This is because in the previous year, the government has made various adjustments, by inspecting public and private investment projects of both locals and internationals. Some projects were terminated due to lack of funding sources, business's financial distress and other issues, all of which have a direct impact on the bank's business operation.

II. ການດຳເນີນທຸລະກິດ ປະຈຳປີ 2020

2.1 ດ້ານການເງິນ

ໃນການປະຕິບັດ ແຜນການດຳເນີນທຸລະກິດ ປະຈຳປີ 2020 ເຖິງແມ່ນວ່າ ສະພາບພະຍາດ COVID-19 ທີ່ມີການລະບາດຢູ່ໃນປະເທດເຮົາ ແລະ ຢູ່ໃນຫຼາຍປະເທດ ເຮັດໃຫ້ການເດີນທາງລະຫວ່າງປະເທດ ຍັງມີຄວາມຫຍຸ້ງຍາກ ເຮັດໃຫ້ທຸລະກຳດ້ານການເງິນສາກົນ ສຳລັບສ່ວນບຸກຄົນ ມີການເຄື່ອນໄຫວຢູ່ໃນລະດັບຕ່ຳສຸດ ຈາກປະເພດບັດສາກົນ ສົ່ງຜົນກະ ຕໍ່ແຫຼ່ງລາຍຮັບ ຈາກບາງຜະລິດຕະພັນຫຼຸດລົງ, ແຕ່ຄະນະຜູ້ບໍລິຫານກໍ່ໄດ້ຫັນທິດທາງ ໂດຍນຳໃຊ້ທາແຮງຂອງທະນາຄານ ຜ່ານການຈັດຕັ້ງປະຕິບັດແຜນການປີ 2020 ສາມາດ ມີຜົນກຳໄລລື່ນແຜນການ 38,87% ຍອດຊັບສິນທັງໝົດ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 53%.

II. Business Operation in 2020

2.1 Financials

On the implementation of 2020 Business Operation Plan, COVID-19 outbreak in the country and other countries has hindered international travel. This has caused international financial transactions for personal banking to perform at the lowest level from international cards, causing the decline in revenue from some products. However, despite these difficulties, the management has shifted its direction by using the bank's potentials, and from the implementation of 2020 plan, the profit outturn is 38.87% above the planned target, while total assets increased by 53% compared to the previous year.

2.2 ການລະດົມເງິນຝາກ

ທະນາຄານຮ່ວມພັດທະນາ ສືບຕໍ່ນຳໃຊ້ນະໂຍບາຍ ການກຳນົດຕົວເລກການລະດົມທຶນ ໃຫ້ແຕ່ລະໜ່ວຍບໍລິການ ຕາມຮູບແບບການກຳນົດຕົວເລກ KPI ເພື່ອເປັນເປົ້າໝາຍຍຸດທະສາດ ແລະ ຍຸດທະວິທີຫຼາກຫຼາຍ ເປັນຕົ້ນແມ່ນ ການຂະຫຍາຍຊ່ອງທາງບໍລິການ ຢ່າງກ້ວາງຂວາງ ລົງສູ່ຈຸດຊຸມຊົນຕ່າງໆ ໃນຂອບເຂດທົ່ວປະເທດ ມີສູນບໍລິການສຳນັກງານໃຫຍ່ ແລະ 12 ສອງສູນບໍລິການ ທົ່ວປະເທດ ຄວາມສະດວກ ສະບາຍ ທັນສະໄໝ ໂອ່ໂຖງເປັນທີ່ດຶງດູດໃຈລູກຄ້າ, ປັບປຸງລະບົບບໍລິການ ຮັກສາໄດ້ມາດຕະຖານສາກົນ ISO 9001: 2015, ນອກຈາກ ສູນບໍລິການສຳນັກງານໃຫຍ່ ຍັງມີໜ່ວຍບໍລິການຫຼວງພະບາງ ແລະ ໜ່ວຍບໍລິການຫົວເມືອງເໜືອ (ແຂວງ ສະຫວັນນະເຂດ) ທີ່ໄດ້ຮັບມາດຕະຖານສາກົນ ISO 9001: 2015 ແລະ ລົງຫາລູກຄ້າ ຢູ່ຕາມສຳນັກງານ, ອົງການ, ບໍລິສັດ ແລະ ຕາມຕະຫຼາດຕ່າງໆ ເພື່ອເຜີຍແຜ່ ແລະ ອະທິບາຍ ຜະລິດຕະພັນທີ່ມີ ໃຫ້ລູກຄ້າຮັບຮູ້ເຖິງຜົນປະໂຫຍດທີ່ຈະໄດ້ຮັບ ຈາກການນຳໃຊ້ຜະລິດຕະພັນຕ່າງໆ ຂອງທະນາຄານຮ່ວມພັດທະນາ; ຈັດງານພົບປະລູກຄ້າ, ການໂຄສະນາຜ່ານສື່ຕ່າງໆ ເຫັນໄດ້ວ່າ ສັງຄົມທົ່ວໄປ ໄດ້ມີຄວາມຮັບຮູ້, ເຂົ້າໃຈຜະລິດຕະພັນ ແລະ ການບໍລິການ ທີ່ທັນສະໄໝ ເຮັດໃຫ້ລູກຄ້າ ຫັນມາໃຊ້ບໍລິການກັບທະນາຄານຮ່ວມພັດທະນາ ນັບມື້ເພີ່ມຂຶ້ນ ເຊິ່ງລູກຄ້າເພີ່ມຂຶ້ນ 16% ທຽບໃສ່ປີຜ່ານມາ; ການລະດົມເງິນຝາກ ໄດ້ເພີ່ມຂຶ້ນ 40,41% ທຽບໃສ່ຍອດເງິນຝາກ ຂອງປີຜ່ານມາ.

2.2 Deposit Mobilization

The Joint Development Bank (JDB) continues to apply the policy to set the target for fund mobilization in each service unit according to the KPI in order to use this as a strategic goal. JDB has used various techniques and tactics such as expanding service coverage to communities nationwide, with headquarters and 12 service centers nationwide that are improved, modernized, convenient, spacious and attractive to customers and clients. Service system has been improved and able to maintain ISO 9001:2015. In addition to the headquarters, Luangprabang service unit and Hua Meuang Neua service unit (Savannakhet province) also met the international standard ISO 9001:2015. JDB has also carried out outreach activities by visiting clients in offices, organizations, companies and in markets to disseminate information and explain about the benefits that clients would receive from using various JDB products. Customers outreach events were organized, along with advertising in different media to enable people to be aware of, and understand, JDB's various products and modern services, which has led to a gradual increase in customers using JDB services. The number of customers has increased by 16% compared to the previous year. Deposit mobilization has increased by 40.41% compared to the total deposits from previous year.

2.3 ການປ່ອຍເງິນກູ້

ທະນາຄານຮ່ວມພັດທະນາ ສືບຕໍ່ປະກອບສ່ວນ ພັດທະນາເສດຖະກິດ ຂອງປະເທດ ຕາມແຜນຍຸດທະສາດ 5ປີ ຄັ້ງທີ 2 ແຕ່ປີ 2020-2025 ທີ່ກຳນົດໄວ້ ຄື: ໜ່ວຍບໍລິການ ຢູ່ທ້ອງຖິ່ນໃດ ໃຫ້ປະກອບສ່ວນພັດທະນາທ້ອງຖິ່ນນັ້ນ ໂດຍການລົງແນະນຳ ຜະລິດຕະພັນສິນເຊື່ອ ທີ່ເຫັນວ່າເໝາະສົມ ເພື່ອເປັນທຶນປະຕິບັດໂຄງການ ທີ່ມີປະສິດທິຜົນ ລວມທັງສະໜອງທຶນ ໃຫ້ແກ່ທຸລະກິດຂະໜາດນ້ອຍ, ຂະໜາດກາງ, ການສ້າງເສດຖະກິດຄອບຄົວ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ຢູ່ແຕ່ລະທ້ອງຖິ່ນ, ໃນປີ 2020 ທະນາຄານຮ່ວມພັດທະນາ ໄດ້ປ່ອຍສິນເຊື່ອ ດ້ວຍຫຼາຍຜະລິດຕະພັນ ໂດຍປະກອບມີ: ສິນເຊື່ອລູກຄ້າລາຍໃຫຍ່ (Corporate Loan), ສິນເຊື່ອສຳລັບ SME, ສິນເຊື່ອຫັນຊັບເປັນທຶນ, ເງິນກູ້ພະນັກງານລັດຖະກອນ, ເງິນກູ້ເພື່ອການສຶກສາ ແລະ ເງິນກູ້ສ່ວນບຸກຄົນ ເຊິ່ງປ່ອຍສິນເຊື່ອເພີ່ມຂຶ້ນ 34% ທຽບໃສ່ຍອດສິນເຊື່ອປີຜ່ານມາ.

2.3 Loans

The Joint Development Bank continues to contribute to the country's economic development according to the 2nd Strategy from 2020-2025, which stated that: a local unit in each local area should contribute to such local development by introducing credit products that are deemed appropriate as financing for effective project implementation, including financing small and medium businesses, family economic activity, and assisting livelihood activities of people in local communities. In 2020, The Joint Development Bank has offered credits in different products such as corporate loan, SME loan, property capitalization loan, government official loan, educational loan and personal loan, with 34% increase in loan disbursement compared to previous year's total loan portfolio.

2.4 ການອອກຜະລິດຕະພັນໃໝ່, ໂປຣໂມຊັ່ນ ແລະ ການສົ່ງເສີມການຕະຫຼາດ

ພະແນກການຕະຫຼາດ ເປັນເຈົ້າການ ຂຶ້ນແຜນການອອກຜະລິດຕະພັນໃໝ່, ການສົ່ງເສີມຂາຍຜະລິດຕະພັນ ດ້ວຍການໃຊ້ຍຸດທະວິທີທີ່ຫຼາກຫຼາຍ ພາຍໃຕ້ການດຳລົງແບບແຜນຊີວິດໃໝ່ ເປັນຕົ້ນແມ່ນ ເຮັດການໂຄສະນາຜ່ານສື່ຕ່າງໆ ເຊັ່ນ: ຜ່ານໜັງສືພິມ, ວິທະຍຸ, ໂທລະພາບ, Facebook, Website, ປ້າຍໂຄສະນາ, ສົມທົບກັບ ໜ່ວຍບໍລິການ ຈັດງານ Events ຢູ່ຕາມງານເທດສະການ, ຕະຫຼາດ ແລະ ຮ້ານອາຫານ ທີ່ເປັນຄູ່ຮ່ວມທຸລະກິດ (Partner) ກັບທະນາຄານຮ່ວມພັດທະນາ ເພື່ອໂຄສະນາ ແລະ ຂາຍຜະລິດຕະພັນ, ລົງຕັ້ງບູດໂຄສະນາຢູ່ກັບບໍລິສັດ ທີ່ເບີກຈ່າຍເງິນເດືອນຜ່ານ JDB, ຈັດລາຍການ Live ສົດ, ໄດ້ຈົກສະຫຼາກລາງວັນຕ່າງໆ ເຊິ່ງຈະມີການມອບລາງວັນໃຫຍ່ ໃຫ້ແກ່ລູກຄ້າ ຄື: ລົດ Lexus ພ້ອມທັງຈັດງານພົບປະລູກຄ້າ ເພື່ອເຮັດໃຫ້ລູກຄ້າ ມາໃຊ້ບໍລິການກັບ ທະນາຄານຮ່ວມພັດທະນາ ນັບມື້ເພີ່ມຂຶ້ນ, ພ້ອມກັນນັ້ນ ພະແນກການຕະຫຼາດ ກໍໄດ້ຕິດຕາມ ການປະຕິບັດຕົວເລກ KPI ຜະລິດຕະພັນຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ຈະມີການຜະລິດລາຍການເກມ ເພື່ອຊ່ວຍເຫຼືອສັງຄົມ ເຮັດໃຫ້ສັງຄົມຮັບຮູ້ ທະນາຄານຮ່ວມພັດທະນາ ຫຼາຍຂຶ້ນເລື້ອຍໆ.

2.4 Launch of New Products, Promotions and Marketing Promotions

The Marketing Department has taken lead in planning for the launch of new products, promoting the sale of products by using different tactics and techniques under the New Normal, including advertising on different media such as newspaper, radio, television, Facebook, website, billboard. They have collaborated with service units to organize events at festivals, markets, and JDB partner restaurants to advertise and sell products. The department has set up advertising booths at companies that offer payroll disbursement via JDB, hosted live programs, arranged lucky draw session for customers with the biggest prize being Lexus car, as well as organizing events to meet with customers so that more customers will use JDB services. In addition, the Marketing Department also monitors KPI targets for various products under its responsibility, and plans to produce game show programs to support the society and to further increase JDB's brand awareness among the public.

JDB

ທະນາຄານຮ່ວມພັດທະນາ

ໜ່ວຍບໍລິການ ທະນາຄານຮ່ວມພັດທະນາ

“ເຕີບໃຫ່ຍໄປພ້ອມກັນ”

“BLOOMING TOGETHER”

LINE QR code

Website www.jdbbank.com.la

jdbbankofficial

Hotline 1499

ວຽກງານສິນເຊື່ອ

ໂຮງານໝາກຕາວ

ໂຄງການກໍ່ສ້າງ ເຂື່ອນໄຟຟ້ານ້ຳຕົກ ນ້ຳຮຸ່ງ1

ວຽກງານຊ່ວຍເຫຼືອສັງຄົມ

ຊ່ວຍເຫຼືອ ໂຮງໝໍ 150 ຕຽງຕ້ານໂຄວິດ

ຍຸກຍູ້ກອງປະຊຸມໃຫຍ່ ນະຄອນຫຼວງວຽງຈັນ

ຊ່ວຍເຫຼືອແຂວງຈຳປາສັກ

ຊ່ວຍເຫຼືອ ມຊ

ຊ່ວຍເຫຼືອໄພນ້ຳຖ້ວມ ແຂວງສະຫວັນນະເຂດ

ວຽກງານຊ່ວຍເຫຼືອສັງຄົມ

ສະໜັບສະໜຸນ ກອງປະຊຸມໃຫ່ຍ ຜູ້ແທນທົ່ວປະເທດ ຄັ້ງທີ XI

ວຽກງານຊ່ວຍເຫຼືອສັງຄົມ

ຊ່ວຍເຫຼືອ ຜູ້ປະສົບໄພ ນ້ຳຖ້ວມ ແຂວງໄຊຍະບູລີ 100 ລ້ານກີບ

ມອບໂຮງຮຽນປະຖົມ ບ້ານສະກິພົມ

ທ່ານ ຖາວອນ ຮັບໃບຍ້ອງຍໍ

ໂຮງຮຽນ ບ້ານສະກິນພົມ

JDB

JDB
ທະນາຄານຮ່ວມພັດທະນາ

JDB
ທະນາຄານຮ່ວມພັດທະນາ
Joint Development Bank
ແຈກໂຊກໃຫຍ່
TOYOTA
Land Cruiser
JDB

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 60956549/22224723-LAS

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ເຈົ້າຂອງ ຂອງທະນາຄານ ຮ່ວມພັດທະນາ ຈຳກັດ

ຄຳເຫັນ

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ"), ເຊິ່ງ ປະກອບດ້ວຍໃບລາຍງານຖານະການເງິນວັນທີ 31 ທັນວາ 2020, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າ ຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບ ດ້ວຍບົດສະຫຼຸບຂອງນະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງທະນາຄານໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ພື້ນຖານການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ. ບັນດາຄວາມຮັບຜິດຊອບຂອງພວກ ຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມເຕີມ ໃນຫົວ *ຄວາມຮັບຜິດຊອບຂອງນັກກວດສອບໃນການ ກວດສອບເອກະສານລາຍງານການເງິນ* ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານດ້ານຈັນຍາບັນສາກົນ ແລະ ບັນດາຂໍ້ກຳນົດທາງ ດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາ ມາດຕະຖານດ້ານຈັນຍາບັນສາກົນ.ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອ ເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ, ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນ ງານ ແລະ ກະແສເງິນສົດຂອງທະນາຄານ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ ບົດອະທິບາຍເລກທີ 23 – ອາກອນ ຂອງເອກະສານລາຍງານການເງິນທີ່ໄດ້ອະທິບາຍເຖິງໜັງສື ແຈ້ງການຂອງກະຊວງການເງິນທີ່ຮຽກຮ້ອງໃຫ້ທະນາຄານທຸລະກິດກິດໄລ່ອາກອນກຳໄລຄືນແຕ່ປີ 2016 ເຖິງ 2019 ແລະ ຜົນກະທົບທີ່ ອາດຈະເກີດຂຶ້ນກັບລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຈ່າຍສຳລັບການຄິດໄລ່ອາກອນກຳໄລໃນຊ່ວງໄລຍະເວລາດັ່ງກ່າວ ເຊິ່ງຍັງລໍຖ້າຄວາມ ກະຈ່າງແຈ້ງ ແລະ ຄຳແນະນຳລະອຽດໃນການຈັດຕັ້ງປະຕິບັດຈາກໜ່ວຍງານທີ່ໄດ້ຮັບຜິດຊອບ.

ຄຳເຫັນຂອງພວກຂ້າພະເຈົ້າບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫານີ້.

EY
Building a better working world

ຄວາມຮັບຜິດຊອບຂອງຄະນະບໍລິຫານທະນາຄານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານທະນາຄານແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫລື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານມີໜ້າທີ່ຮັບຜິດຊອບການປະເມີນຄວາມສາມາດຂອງທະນາຄານເພື່ອດຳເນີນທຸລະກິດບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍ, ສິ່ງທີ່ຍອມຮັບໄດ້, ບັນຫາທີ່ເກີດຂຶ້ນທີ່ມີຄວາມສອດຄ່ອງກັບກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ຫຼັກການບັນຊີຕາມພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດເວັ້ນເສຍແຕ່ວ່າ ຄະນະບໍລິຫານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາການຮັບປະກັນທີ່ສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບນັ້ນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານ ໃນຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກ

ຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຍຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງນະໂຍບາຍບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນການບັນຊີ ແລະ ການເປີດເຜີຍທີ່ສ້າງຂຶ້ນໂດຍຄະນະບໍລິຫານຂອງທະນາຄານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງທະນາຄານ ກ່ຽວກັບການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າກຳນົດໄດ້ໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ບໍລິສັດ ເອິນແອນຢັ້ງ ລາວ ຈຳກັດ

ບໍລິສັດ ເອິນ ແອນ ຢັ້ງ ລາວ ຈຳກັດ
ERNST & YOUNG LAO CO.,LTD

Anh Hoang Trinh
ຂາຮຸ້ນ
ໃບອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນເລກທີ: 014/LCPAA-APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2021

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

ລ/ດ	ລາຍການ	ບົດອະທິບາຍ ເລກທີ	2020 ກີບ	2019 ກີບ
ກ.	ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ			
1	ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	3	329,731,830,822	238,383,764,017
2	ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ	3	(259,603,257,712)	(184,152,289,220)
I.	ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ		70,128,573,110	54,231,474,797
3	ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ	4	141,232,161,868	99,250,348,481
4	ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່າບໍລິການ	4	(9,434,253,380)	(9,207,260,176)
5	(ຂາດທຶນ)/ກຳໄລສຸດທິຈາກການລົງທຶນໃນຫຼັກຊັບ	5	(930,000,000)	4,382,666,667
6	ກຳໄລສຸດທິຈາກການຊື້ - ຂາຍເງິນຕາຕ່າງປະເທດ	8	26,515,104,641	12,127,020,674
II.	ລາຍຮັບສຸດທິຈາກການດຳເນີນງານ		227,511,586,239	160,784,250,443
ຂ.	ລາຍຮັບ ແລະ ລາຍຈ່າຍອື່ນໆ			
7	ລາຍຮັບອື່ນໆຈາກການດຳເນີນງານ	6	8,487,552,820	2,181,384,088
8	ລາຍຈ່າຍບໍລິຫານ		(95,100,281,034)	(83,045,051,566)
8.1	ລາຍຈ່າຍເງິນເດືອນ ແລະ ຄ່າໃຊ້ຈ່າຍບຸກຄະລາກອນອື່ນໆ	7	(48,330,262,130)	(43,700,802,760)
8.2	ລາຍຈ່າຍບໍລິຫານອື່ນໆ	9	(46,770,018,904)	(39,344,248,806)
9	ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ	17	(21,034,031,212)	(24,293,402,766)
10	ລາຍຈ່າຍອື່ນໆຈາກການດຳເນີນງານ	10	(12,768,250,609)	(4,741,454,675)
11	ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ	15	2,076,211,390	271,755,361
III.	ກຳໄລທັງໝົດກ່ອນຫັກອາກອນ		109,172,787,594	51,157,480,885
12	ລາຍຈ່າຍອາກອນກຳໄລ	23.1	(23,489,074,122)	(11,495,662,665)
IV.	ກຳໄລຫຼັງຫັກອາກອນ		85,683,713,472	39,661,818,220

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK

ກວດກາ ແລະ ອະນຸມັດໂດຍ:

ທ່ານ ຈັນໄລ ສີພະໂທນ
ຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2020

ລ/ດ	ຊັບສິນ	ບົດອະທິບາຍ ເລກທີ	31/12/2020 ກີບ	31/12/2019 ກີບ
I	ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ("ທຫຫລ")		**2,186,223,607,571**	**869,843,706,547**
1	ເງິນສົດໃນຄັງ	11	720,715,407,800	395,293,690,118
2	ເງິນຝາກຢູ່ ທຫຫລ	12	1,465,508,199,771	474,550,016,429
II	**ໜີ້ຕ້ອງຮັບຈາກທະນາຄານອື່ນ**	**13**	**236,012,927,446**	**260,456,344,730**
1	ເງິນຝາກກະແສລາຍວັນ		173,200,203,737	204,214,554,457
2	ເງິນຝາກມີກຳນົດ		18,502,000,000	17,686,000,000
3	ເງິນຝາກປະຢັດ		44,310,723,709	38,555,790,273
III	**ການລົງທຶນໃນຫຼັກຊັບ**	**14**	**29,350,000,000**	**53,250,000,000**
1	ຫຼັກຊັບມີໄວ້ເພື່ອຂາຍ		2,350,000,000	3,380,000,000
2	ຫຼັກຊັບຖືໄວ້ຈົນຄົບກຳນົດ		27,000,000,000	49,870,000,000
IV	**ເງິນກູ້ໃຫ້ແກ່ລູກຄ້າ, ຫັກລົບເງິນແຮສະເພາະ ສຳລັບກິດຈະກຳສິນເຊື່ອ**	**15**	**4,595,516,104,427**	**3,314,709,075,162**
V	**ການລົງທຶນໃນການບໍລິສັດຮ່ວມທຶນ**	**16**	**854,440,000**	**514,440,000**
VI	**ຊັບສິນບັດຄົງທີ່**	**17**	**233,469,119,490**	**231,913,316,264**
1	ຊັບສິນບັດຄົງທີ່ພວມກໍ່ສ້າງ		2,751,157,513	1,183,081,956
2	ຊັບສິນບັດຄົງທີ່ບໍ່ມີຕົວຕົນ		137,921,992,665	145,664,365,355
3	ຊັບສິນບັດຄົງທີ່ມີຕົວຕົນ ແລະ ສິດໃນການໃຊ້ ຊັບສິນ		92,795,969,312	85,065,868,953
VII	**ຊັບສິນອື່ນໆ**		**397,622,772,236**	**287,355,743,732**
1	ດອກເບ້ຍຄ້າງຮັບ		33,723,803,830	27,631,186,213
2	ຊັບສິນອື່ນໆ	18	363,898,968,406	259,724,557,519
	ລວມຊັບສິນ		**7,679,048,971,170**	**5,018,042,626,435**

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

ລ/ດ	ໜີ້ສິນ ແລະ ທຶນ	ບົດອະທິບາຍ ເລກທີ	31/12/2020 ກີບ	31/12/2019 ກີບ
I	**ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ**	**19**	**943,108,026,948**	**115,057,536,226**
1	ເງິນຝາກກະແສລາຍວັນ		1,448,026,948	4,313,536,226
2	ເງິນຝາກມີກຳນົດ		168,360,000,000	110,744,000,000
3	ເງິນກູ້ຢືມ		773,300,000,000	-
II	**ໜີ້ຕ້ອງສົ່ງໃຫ້ລູກຄ້າ**	**20**	**5,945,354,898,355**	**4,240,094,658,789**
1	ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ		1,552,200,736,325	1,291,309,508,575
2	ເງິນຝາກມີກຳນົດ		4,393,152,311,830	2,948,783,187,593
3	ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ		1,850,200	1,962,621
III	**ໜີ້ສິນອື່ນໆ**		**223,783,535,954**	**157,407,034,201**
1	ດອກເບ້ຍຄ້າງຈ່າຍ		188,469,815,564	131,868,440,476
2	ໜີ້ຕ້ອງສົ່ງອື່ນໆ	21	35,313,720,390	25,538,593,725
	ລວມໜີ້ສິນ		**7,112,246,461,257**	**4,512,559,229,216**
IV	**ທຶນເຈົ້າຂອງ ແລະ ຄັງສຳຮອງ**			
1	ທຶນຈົດທະບຽນຖອກແລ້ວ		404,666,100,000	404,666,100,000
2	ຄັງສະສົມຕາມລະບຽບການ		8,960,056,385	391,685,038
3	ຄັງສະສົມຂະຫຍາຍທຸລະກິດ		4,834,702,916	550,517,242
4	ຄັງສຳຮອງຈາກການຕີມູນຄ່າ		94,029,775,080	94,029,775,080
5	ເງິນແຮທີ່ວໄປສຳລັບກິດຈະກຳສິນເຊື່ອ		22,695,329,628	16,488,032,405
6	ກຳໄລ/(ຂາດທຶນ) ສະສົມ	22	31,616,545,904	(10,642,712,546)
	ລວມທຶນ		**556,802,509,913**	**505,483,397,219**
	ລວມໜີ້ສິນ ແລະ ທຶນ		**7,679,048,971,170**	**5,018,042,626,435**

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

ລ/ດ	ລາຍການນອກໃບລາຍງານຖານະການເງິນ	ບົດອະທິບາຍ ເລກທີ	31/12/2020 ກີບ	31/12/2019 ກີບ
I	ຄຳໝັ້ນສັນຍາ			
A	ຄຳໝັ້ນສັນຍາທາງການເງິນ		**5,273,070,000**	**76,728,588,680**
1	ຄຳໝັ້ນສັນຍາທາງການເງິນໃຫ້ກັບລູກຄ້າ		5,273,070,000	76,728,588,680
B	ຄຳໝັ້ນສັນຍາໃນການຄ້ຳປະກັນ		**100,972,973,970**	**11,340,818,475**
1	ຄຳໝັ້ນສັນຍາໃນການຄ້ຳປະກັນໃຫ້ລູກຄ້າ		100,972,973,970	11,340,818,475
	ລວມຄຳໝັ້ນສັນຍາທີ່ໄດ້ໃຫ້		**106,246,043,970**	**88,069,407,155**
II	ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ			
A	ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້		**4,055,061,701,122**	**4,334,983,424,148**
1	ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ ສຳລັບເງິນກູ້ໃຫ້ລູກຄ້າ		4,055,061,701,122	4,334,983,424,148
	ລວມຫຼັກຊັບຄ້ຳປະກັນ ແລະ ການຈຳນອງ		**4,161,307,745,092**	**4,423,052,831,303**

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກບັນຊີ

ສະບັບລົງວັນທີ 27 ພຶດສະພາ 2021

ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK

ອະນຸມັດໂດຍ:

ທ້າວ ວິໄລ ສິພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2021

ບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ທຶນຈົດທະບຽນ ຖອກແລ້ວ ກີບ	*ຄັງສະສົມຕາມ ລະບຽບການ ກີບ*	*ຄັງສະສົມຂະຫຍາຍ ທຸລະກິດ ກີບ*	*ຄັງສຳຮອງຈາກການ ຕີມູນຄ່າ ກີບ*	*ເງິນແຮທຶ່ວໄປສຳລັບ ກິດຈະກຳສິນເຊື່ອ ກີບ*	*ກຳໄລ/(ຂາດທຶນ) ສະສົມ ກີບ*	*ລວມ ກີບ*
ຍອດເຫຼືອນະ ວັນທີ 31 ທັນວາ 2019	**404,666,100,000**	**391,685,038**	**550,517,242**	**94,029,775,080**	**16,488,032,405**	**(10,642,712,546)**	**505,483,397,219**
ກຳໄລສຸດທິພາຍໃນປີ	-	-	-	-	-	85,683,713,472	85,683,713,472
ຄັງສະສົມຕາມລະບຽບການ ພາຍໃນປີ		8,568,371,374	-	-	-	(8,568,371,347)	-
ຄັງສະສົມຂະຫຍາຍທຸລະກິດ	-	-	4,284,185,674			(4,284,185,674)	-
ເງິນປັນຜົນຈ່າຍໃຫ້ຜູ້ຖືຫຸ້ນ	-	-	-			(30,571,898,001)	(30,571,898,001)
ເງິນແຮທຶ່ວໄປສຸດທິສຳລັບ ກິດຈະກຳສິນເຊື່ອພາຍໃນປີ	-	-	-	-	5,389,741,999	-	5,389,741,999
ສ່ວນຕ່າງຈາກອັດຕາ ແລກປ່ຽນເງິນຕາຕ່າງປະເທດ	-	-	-	-	817,555,224	-	817,555,224
ຍອດເຫຼືອນະ ວັນທີ 31 ທັນວາ 2020	**404,666,100,000**	**8,960,056,385**	**4,834,702,916**	**94,029,775,080**	**22,695,329,628**	**31,616,545,904**	**566,802,509,913**

ະກຽມໂດຍ:

ານ ຄຳສີງ ສອນສິນນະວົງ
ອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກ ບັນຊີ

ະຄອນຫຼວງວຽງຈັນ, ສປປ ລາວ
7 ພຶດສະພາ 2021

ອະນຸມັດໂດຍ:

ທ້າວ ວິໄລ ສີພະພອນ
ຮອງຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	2020 ກີບ	2019 ກີບ
ກິດຈະກຳການດຳເນີນງານ			
ກຳໄລສຸດທິກ່ອນຫັກອາກອນ		**109,172,787,594**	**51,157,480,885**
ດັດແກ້ສຳລັບ:			
ກຳໄລຈາກການລົງທຶນ		-	(5,142,666,667)
ລາຍຈ່າຍຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ		21,034,031,212	24,293,402,766
ລາຍຈ່າຍເງິນແຮສຸດທິ		5,296,646,888	2,791,783,516
ລາຍຮັບດອກເບ້ຍ		(329,731,830,822)	(238,383,764,017)
ລາຍຈ່າຍດອກເບ້ຍ		259,603,257,712	184,152,289,220
ກະແສເງິນສົດຈາກກຳໄລໃນການດຳເນີນງານ ກ່ອນການ ປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ		**65,374,892,584**	**18,868,525,703**
(ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນຈາກການດຳເນີນງານ			
ເງິນຝາກກັບທະນາຄານອື່ນ		(28,102,013,935)	(62,622,931,444)
ເງິນກູ້ໃຫ້ແກ່ລູກຄ້າ		(1,279,835,625,107)	(1,124,478,225,058)
ຊັບສິນທາງການເງິນອື່ນໆ		22,870,000,000	27,490,610,000
ຊັບສິນອື່ນໆ		(88,604,479,796)	(98,452,286,496)
ເພີ່ມຂຶ້ນ/(ຫຼຸດລົງ) ໃນໜີ້ສິນຈາກການດຳເນີນງານ			
ເງິນຝາກຢູ່ທະນາຄານອື່ນ		828,050,490,722	(8,773,110,280)
ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ແກ່ລູກ ຄ້າ		1,705,260,532,811	1,314,862,884,123
ໜີ້ສິນອື່ນໆ		10,498,717,028	411,879,351
ດອກເບ້ຍທີ່ໄດ້ຮັບ		313,947,329,508	225,070,589,848
ດອກເບ້ຍທີ່ໄດ້ຈ່າຍ		(203,001,882,624)	(143,262,312,702)
ອາກອນກຳໄລທີ່ໄດ້ຈ່າຍ	23	(24,542,623,702)	(14,334,060,426)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**1,321,915,337,489**	**134,781,562,646**
ກິດຈະກຳການລົງທຶນ			
ການຊຳລະເງິນເພື່ອຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່ໃ ໝ່		(27,388,303,140)	(1,339,187,044)
ຮັບຈາກການສະສາງຊັບສິນ	6	119,333,456	6,926,000
ເງິນປັນຜົນທີ່ໄດ້ຮັບ		100,000,000	160,000,000
ການລົງທຶນໃນການຮ່ວມທຶນ		(340,000,000)	-
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການລົງທຶນ		**(27,508,969,684)**	**(1,172,261,044)**
ກິດຈະກຳທາງການເງິນ			-
ເງິນປັນຜົນຈ່າຍໃຫ້ຜູ້ຖືຮຸ້ນ		(30,571,898,000)	-
ກະແສເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ		**(30,571,898,000)**	-

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	2020 ກີບ	2019 ກີບ
ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		1,263,834,469,805	133,609,301,602
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		924,180,695,282	790,571,393,680
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	24	2,188,015,165,087	924,180,695,282

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກ ບັນຊີ

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2021

1. ຂໍ້ມູນກ່ຽວກັບທະນາຄານ

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ແມ່ນທະນາຄານຈຳກັດຄວາມຮັບຜິດຊອບຕໍ່ໜີ້ສິນ ທີ່ໄດ້ດຳເນີນງານ ແລະ ຈົດທະບຽນ ຢູ່ ໃນ ສປປ ລາວ.

ທະນາຄານ ໄດ້ສ້າງຕັ້ງຂຶ້ນພາຍໃຕ້ສັນຍາຮ່ວມລົງທຶນ ລົງວັນທີ 2 ກຸມພາ 1989 ລະຫວ່າງ ທະນາຄານແຫ່ງ ສປປ ລາວ ("ທຫລ") ແລະ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບຟິດ ຈຳກັດ, ເປັນກຸ່ມບໍລິສັດໃນປະເທດໄທ. ເຊິ່ງພາຍໃຕ້ຂໍ້ຕົກລົງ, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບຟິດ ຈຳກັດ ແມ່ນຖືຮຸ້ນ 70% ແລະ ທຫລ ແມ່ນ 30% ຕາມລຳດັບ. ໃນປີ 2010, ທຫລ ໄດ້ໂອນທຶນປະກອບທັງໝົດໃຫ້ແກ່ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບຟິດ ຈຳກັດ. ໃນປີ 2012, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບຟິດ ຈຳກັດ ໄດ້ຂາຍຮຸ້ນທັງໝົດ 100% ໃຫ້ແກ່ 3 ນັກລົງທຶນພາຍໃນ.

ທະນາຄານດຳເນີນທຸລະກິດພາຍໃຕ້ຂໍ້ຕົກລົງ ເລກທີ 04/PMA ອອກໂດຍປະທານຫ້ອງການວ່າການລັດຖະມົນຕີ ແລະ ຂໍ້ຕົກລົງ ເລກທີ 04/ທຫລ ລົງວັນທີ 21 ມັງກອນ 1989, ສະບັບດັດແກ້ຂອງໃບອະນຸຍາດລົງທຶນ ເລກທີ 133/10 ລົງວັນທີ 23 ກັນຍາ 2010 ອອກໂດຍກະຊວງແຜນການ ແລະ ການລົງທຶນ ແລະ ພາຍໃຕ້ໃບທະບຽນວິສະຫະກິດ ເລກທີ 0234/ ຫຈທ ລົງວັນທີ 3 ພຶດສະພາ 2013 ເຊິ່ງອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ.

ກິດຈະກຳຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມ ແລະ ການຮັບເງິນຝາກທີ່ມີການກຳນົດໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ນິຕິບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ແກ່ບັນດາອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມເປັນໄປໄດ້ຂອງແຫລ່ງທຶນຂອງທະນາຄານ; ດຳເນີນທຸລະກິດທາງດ້ານເງິນຕາຕ່າງໆປະເທດ; ການໃຫ້ບໍລິການທາງດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກກະສານທີ່ມີມູນຄ່າຕ່າງໆ ແລະ ການໃຫ້ບໍລິການທຸລະກຳຕ່າງໆແກ່ລູກຄ້າ ແລະ ການບໍລິການອື່ນໆທີ່ໄດ້ຮັບອະນຸຍາດຈາກ ທຫລ.

ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານໃນເບື້ອງຕົ້ນ ແມ່ນ 33,882,440,000 ກີບ. ທຶນຈົດທະບຽນຖອກແລ້ວຂອງທະນາຄານ ນະວັນທີ 31 ທັນວາ 2020 ແມ່ນ 404,666,100,000 ກີບ (31 ທັນວາ 2019: 404,666,100,000 ກີບ).

ເຄືອຂ່າຍການດຳເນີນງານ

ສຳນັກງານໃຫ່ຍຂອງທະນາຄານ ຕັ້ງຢູ່ອາຄານ ເລກທີ 82, ຖະໜົນ ລ້ານຊ້າງ, ນະຄອນຫຼວງວຽງຈັນ, ສປປ ລາວ. ນະວັນທີ 31 ທັນວາ 2020, ທະນາຄານມີສຳນັກງານໃຫ່ຍ ໜຶ່ງ (1) ແຫ່ງ, ໜ່ວຍບໍລິການ ຫ້າສິບຫົກ (56) ແຫ່ງ ແລະ ໜ່ວຍບໍລິການ ຍ່ອຍ ສາມ (3) ແຫ່ງ.

ພະນັກງານ

ພະນັກງານທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2020 ມີ 578 ຄົນ (31 ທັນວາ 2019: 551 ຄົນ).

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

2.1 ຄຳຖະແຫຼງການ

ຄະນະບໍລິຫານຂອງທະນາຄານ ຂໍຢັ້ງຢືນວ່າໄດ້ກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບກົດໝາຍບັນຊີ ຂອງ ສປປ ລາວ ແລະ ລະບຽບການບັນຊີທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ນຳ ສະເໜີເອກະສານລາຍງານການເງິນ.

2.2 ພື້ນຖານໃນການກະກຽມ

ທະນາຄານບັນທຶກບັນຊີ ແລະ ໄດ້ກະກຽມເອກະສານລາຍງານການເງິນໃນຫົວໜ່ວຍ ກີບ ("LAK") ໂດຍສອດຄ່ອງກັບ ດຳລັດ ເລກທີ 02/ນຍ ອອກໂດຍ ນາຍົກລັດຖະມົນຕີແຫ່ງ ສປປ ລາວ, ລົງວັນທີ 22 ມີນາ 2000 ແລະ ຕາມກົດໝາຍການ ບັນຊີ ຂອງ ສປປ ລາວ ແລະ ລະບຽບການ ທີ່ກຳນົດໃຊ້ໂດຍ ທະນາຄານແຫ່ງ ສປປ ລາວ ກ່ຽວກັບການກະກຽມ ແລະ ການ ນຳສະເໜີໃນເອກະສານລາຍງານການເງິນ ("LAS").

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນ ປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮັບຮູ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ນອກນັ້ນ, ເອກະສານລາຍງານການເງິນສະບັບນີ້ບໍ່ມີ ຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການ ແລະ ການປະຕິບັດ ການບັນຊີທີ່ຍອມຮັບໂດຍທົ່ວໄປໃນປະເທດອື່ນທີ່ນອກເໜືອຈາກ ສປປ ລາວ.

ປີການບັນຊີ

ປີການບັນຊີຂອງທະນາຄານສຳລັບການກະກຽມເອກະສານລາຍງານການເງິນແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

2.3 ການປ່ຽນແປງຂອງນະໂຍບາຍການບັນຊີ

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບ ເອກະສານລາຍງານການເງິນທີ່ກະກຽມສຳລັບການລາຍງານຂອງທະນາຄານ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020, ຍົກເວັ້ນ ການປ່ຽນແປງຂອງນະໂຍບາຍການບັນຊີ ແລະ ບົດອະທິບາຍທີ່ກ່ຽວຂ້ອງຕໍ່ໄປນີ້:

ສັນຍາເຊົ່າ

ໃນປີ 2020, ນະໂຍບາຍການບັນຊີຂອງທະນາຄານສຳລັບສັນຍາເຊົ່າແມ່ນປ່ຽນແປງໂດຍອີງໃສ່ແຈ້ງການ ສະບັບເລກທີ 1433/ທຫລ ລົງວັນທີ 24 ຕຸລາ 2019 ແລະ ແຈ້ງການສະບັບເລກທີ 216/ທຫລ ລົງວັນທີ 25 ກຸມພາ 2020 ຊຶ່ງຮຽກຮ້ອງ ໃຫ້ທະນາຄານທຸລະກິດນຳໃຊ້ IFRS 16 ໃນການກະກຽມ ແລະ ການລາຍງານເອກະສານລາຍງານການເງິນ.

ມາດຕະຖານ IFRS 16 ໄດ້ກຳນົດຫຼັກການສຳລັບການຮັບຮູ້, ການວັດແທກມູນຄ່າ, ການນຳສະເໜີ ແລະ ການເປີດເຜີຍ ສັນຍາເຊົ່າ ແລະ ຍັງຮຽກຮ້ອງໃຫ້ຜູ້ເຊົ່າ ຕ້ອງຕິດຕາມຊັບສິນສັນຍາເຊົ່ານັ້ນໃນໃບລາຍງານຖານະການເງິນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.3 *ການປ່ຽນແປງຂອງນະໂຍບາຍການບັນຊີ* (ຕໍ່)

ສັນຍາເຊົ່າ (ຕໍ່)

ທະນາຄານໄດ້ຮັບຮອງເອົາ IFRS 16 ມາໃຊ້ໂດຍໃຊ້ວິທີການດັດແກ້ຍ້ອນຫຼັງໂດຍວັນທີຂອງການຈັດຕັ້ງປະຕິບັດຄັ້ງທຳອິດ ແມ່ນວັນທີ 1 ມັງກອນ 2020. ພາຍໃຕ້ວິທີການດັ່ງກ່າວ, ມາດຕະຖານຈະຖືກນຳໄປໃຊ້ຍ້ອນຫຼັງໂດຍຜົນກະທົບສະສົມຈາກການໃຊ້ມາດຕະຖານເປັນຄັ້ງທຳອິດຖືກຮັບຮູ້ໃນມື້ເລີ່ມຕົ້ນຂອງການນຳໃຊ້. ທະນາຄານໄດ້ເລືອກທີ່ຈະນຳໃຊ້ແນວທາງການບັນຊີສຳລັບການປ່ຽນຜ່ານແບບງ່າຍດາຍ ເຊິ່ງອະນຸຍາດໃຫ້ໃຊ້ມາດຕະຖານສະເພາະກັບສັນຍາທີ່ເຄີຍຖືກລະບຸວ່າເປັນສັນຍາເຊົ່າທີ່ໃຊ້ນະໂຍບາຍການບັນຊີເດີມໃນມື້ເລີ່ມຕົ້ນຂອງການນຳໃຊ້. ແທນທີ່ທະນາຄານໄດ້ນຳໃຊ້ມາດຕະຖານສະເພາະຕໍ່ສັນຍາທີ່ຖືກກຳນົດກ່ອນໜ້ານີ້ວ່າເປັນສັນຍາເຊົ່າໃນມື້ເລີ່ມຕົ້ນຂອງການນຳໃຊ້.

ທະນາຄານມີສັນຍາສຳລັບການເຊົ່າຕຶກຫ້ອງການ. ກ່ອນທີ່ທາງທະນາຄານຈະຮອງຮັບເອົາ IFRS 16, ທະນາຄານໄດ້ຈັດປະເພດການເຊົ່າຂອງແຕ່ລະປະເພດ (ໃນຖານະຜູ້ເຊົ່າ) ໃນວັນເລີ່ມຕົ້ນເປັນການເຊົ່າເພື່ອການດຳເນີນງານ. ອີງຕາມບົດອະທິບາຍເລກທີ 2.15 ສຳລັບນະໂຍບາຍການບັນຊີທີ່ນຳໃຊ້ກ່ອນວັນທີ 1 ມັງກອນ 2020.

ພາຍຫຼັງການຮັບຮອງເອົາ IFRS 16, ທະນາຄານໄດ້ນຳໃຊ້ວິທີການຮັບຮູ້ ແລະ ການວັດແທກດ່ຽວສຳລັບການເຊົ່າທັງໝົດ, ຍົກເວັ້ນການເຊົ່າໃນໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມູນຄ່າຕ່ຳ. ອີງຕາມບົດອະທິບາຍເລກທີ 2.14 ຕາມນະໂຍບາຍການບັນຊີທີ່ເລີ່ມນຳໃຊ້ນັບແຕ່ ວັນທີ 1 ມັງກອນ 2020. ມາດຕະການໄດ້ສະໜອງຂໍ້ກຳນົດການຫັນປ່ຽນສະເພາະ ແລະ ຕາມການປະຕິບັດຕາມຕົວຈິງ ເຊິ່ງຖືກນຳໃຊ້ໂດຍທະນາຄານ.

- ສັນຍາເຊົ່າກ່ອນໜ້ານີ້ແມ່ນຍັງຖືວ່າເປັນການເຊົ່າດຳເນີນງານ

ທະນາຄານຮັບຮູ້ວ່າສິດໃນການນຳໃຊ້ຊັບສິນ ແລະ ໜີ້ສິນຈາກການເຊົ່າສຳລັບລາຍການເຊົ່າທີ່ກ່ອນໜ້າຈັດປະເພດເປັນການເຊົ່າດຳເນີນງານ, ຍົກເວັ້ນ ການເຊົ່າໃນໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ. ສິດໃນການນຳໃຊ້ຊັບສິນສຳລັບສັນຍາເຊົ່າ ສ່ວນໃຫຍ່ຮັບຮູ້ໂດຍໃຊ້ມູນຄ່າຕາມບັນຊີຕາມມາດຕະການນະໂຍບາຍການບັນຊີທີ່ໄດ້ວາງອອກ, ນອກເໜືອຈາກການໃຊ້ອັດຕາການກູ້ຢືມນະວັນທີເລີ່ມເຊັນສັນຍາ. ບາງລາຍການເຊົ່າ, ສິດໃນການນຳໃຊ້ຊັບສິນ ແມ່ນຮັບຮູ້ຕາມຈຳນວນເງິນເທົ່າກັບໜີ້ຈາກການເຊົ່າ, ການດັດແກ້ທີ່ກ່ຽວຂ້ອງກັບລາຍຈ່າຍຄ່າເຊົ່າລ່ວງໜ້າ ແລະ ຄ້າງຈ່າຍທີ່ໄດ້ຮັບຮູ້ກ່ອນໜ້ານີ້. ໜີ້ສິນຈາກການເຊົ່າແມ່ນຮັບຮູ້ຕາມມູນຄ່າປັດຈຸບັນຂອງຈຳນວນເງິນທີ່ຊຳລະຕາມຕາມການເຊົ່າທີ່ຍັງເຫຼືອ, ໂດຍຈະຫຼຸດລາຄາໂດຍນຳໃຊ້ອັດຕາການກູ້ຢືມນະວັນທີເຊັນສັນຍາໃນເບື້ອງຕົ້ນ.

ທະນາຄານຍັງໄດ້ນຳໃຊ້ບັນດາຂໍ້ຍົກເວັ້ນທີ່ນອນໃນມາດຕະຖານ ດັ່ງນີ້:

- ນຳໃຊ້ອັດຕາຫຼຸດລາຄາດຽວກັບກຸ່ມສັນຍາການເຊົ່າທີ່ມີລັກສະນະຄ້າຍຄືກັນຢ່າງສົມເຫດສົມຜົນ;
- ອີງຕາມການປະເມີນວ່າສັນຍາເຊົ່າມີພາລະຜູກພັນທັນທີກ່ອນວັນທີເຊັນສັນຍາຄັ້ງທຳອິດຫຼືບໍ່;
- ນຳໃຊ້ຂໍ້ຍົກເວັ້ນສັນຍາເຊົ່າທີ່ມີໄລຍະເວລາການເຊົ່າສິ້ນສຸດພາຍໃນ 12 ເດືອນ ນັບຈາກວັນທີທີ່ເຊັນສັນຍາຄັ້ງທຳອິດ;
- ຍົກເວັ້ນຄ່າໃຊ້ຈ່າຍໂດຍກົງໃນເບື້ອງຕົ້ນຈາກການຕີມູນຄ່າຂອງ ສິດໃນການນຳໃຊ້ຊັບສິນໃນວັນທີທີ່ເຊັນສັນຍາໃນເບື້ອງຕົ້ນ;
- ຖືກນຳໃຊ້ໃນການກຳນົດໄລຍະເວລາຂອງສັນຍາເຊົ່າທີ່ມີທາງເລືອກໃນການຕໍ່ ຫຼື ຍົກເລີກສັນຍາເຊົ່າ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.3 *ການປ່ຽນແປງຂອງນະໂຍບາຍການບັນຊີ* (ຕໍ່)

ສັນຍາເຊົ່າ (ຕໍ່)

ອີງຕາມຂໍ້ມູນຂ້າງເທິງ, ວັນທີ 1 ມັງກອນ 2020:

- ສິດໃນການນຳໃຊ້ຊັບສິນ ມູນຄ່າ 14,219,271,621 ກີບ ແມ່ນຖືກຈັດປະເພດຄືນ ຈາກ ລາຍຈ່າຍຈ່າຍລ່ວງໜ້າ ແລະ ສະແດງໃນບົດລາຍງານຖານະທາງການເງິນ ຢູ່ "ຊັບສິນບັດຄົງທີ່ມີຕົວຕົນ ແລະ ສິດໃນການນຳໃຊ້ຊັບສິນ".
- ໜີ້ສິນຈາກການເຊົ່າ ມູນຄ່າ 8,237,962,606 ກີບ ແມ່ນໄດ້ຖືກຮັບຮູ້ ແລະ ສະແດງໃນໃບລາຍງານຖານະການເງິນ ຢູ່ "ໜີ້ສິນອື່ນໆ".
- ການຮັບຮອງເອົາ IFRS 16 ບໍ່ມີຜົນກະທົບຫຍັງຕໍ່ກຳໄລສະສົມຂອງທະນາຄານ.

ໜີ້ສິນຈາກການເຊົ່າ ນະວັນທີ 1 ມັງກອນ 2020 ສາມາດສົມທຽບຍອດກັບພັນທະສັນເຊົ່າດຳເນີນງານ ນະວັນທີ 31 ທັນວາ 2019 ດັ່ງລຸ່ມນີ້:

	ກີບ
ພັນທະສັນຍາເຊົ່າດຳເນີນງານ ນະວັນທີ 31 ທັນວາ 2019	**12,162,782,553**
ອັດຕາການກູ້ຢືມສ່ວນເພີ່ມສະເລ່ຍຖ່ວງນ້ຳໜັກ ນະວັນທີ 1 ມັງກອນ 2020:	
ເປັນ ກີບ	*9.618%*
ເປັນ ໂດລາ	*7.052%*
ເປັນ ບາດ	*7.859%*
ມູນຄ່າຫຼຸດຂອງພັນທະສັນຍາເຊົ່າໃນການດຳເນີນງານ ນະວັນທີ 1 ມັງກອນ 2020:	**9,228,193,364**
ລືບ:	
ຂໍ້ຜູກພັນທີ່ກ່ຽວກັບການເຊົ່າໄລຍະສັ້ນ	920,414,297
ຂໍ້ຜູກພັນທີ່ກ່ຽວກັບການເຊົ່າຊັບສິນທີ່ມີມູນຄ່າຕ່ຳ	69,816,461
ບວກ:	
ການຊຳລະຄ່າເຊົ່າທີ່ກ່ຽວກັບໄລຍະເວລາການຕໍ່ສັນຍາທີ່ບໍ່ໄດ້ລວມໃນພັນທະສັນຍາເຊົ່າໃນ ການດຳເນີນງານ ນະວັນທີ 31 ທັນວາ 2019	-
ໜີ້ສິນຈາກການເຊົ່າ ນະວັນທີ 1 ມັງກອນ 2020	**8,237,962,606**

2.4 *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫລັກການບັນຊີແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີຄິດໄລ່ແບບສະເໜີຕົ້ນ ແລະ ອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍ ເລກທີ 2.9 ສຳລັບນິຍາມຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຄະນະອຳນວຍການເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.5 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການການໂອນເງິນ, ການຄ້ຳຫາງການເງິນ, ຄ່າທຳນຽມຈາກສິນເຊື່ອ ແລະ ອື່ນໆ

ຄ່າທຳນຽມ ແລະ ຄ່າບໍລິການ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ບົນພື້ນຖານຫຼັກການເງິນສົດ.

2.6 ການຮັບຮູ້ລາຍຮັບຈາກເງິນປັນຜົນ

ລາຍຮັບຈາກເງິນປັນຜົນຈາກການລົງທຶນ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ເມື່ອທະນາຄານມຄສິດໃນການຮັບການຊຳລະເງິນ.

2.7 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕ່ຳກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບ 30 ວັນ ຫຼື ຕ່ຳກວ່າ.

2.8 ເງິນກູ້ໃຫ້ແກ່ລູກຄ້າ

ເງິນກູ້ໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້ຳງຊຳລະ ລົບໃຫ້ເງິນແຮສະເພາະ.

2.9 ການຈັດຊັ້ນໜີ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ

ການຈັດຊັ້ນປະເພດເງິນກູ້

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ ("ທຫລ 512") ລົງວັນທີ 29 ມິຖຸນາ 2018 ແລະ ຄຳແນະນຳການຈັດຕັ້ງປະຕິບັດເລກທີ 898/ກຄທ ("ທຫລ 898") ລົງວັນທີ 14 ພະຈິກ 2018, ທະນາຄານ ໄດ້ຈັດຊັ້ນເງິນກູ້ ເປັນ 5 ກຸ່ມ ໂດຍອີງຕາມປະຫວັດການຄ້ຳງຈ່າຍ ແລະ ປັດໄຈດ້ານຄຸນນະພາບອື່ນໆ. ເງິນກູ້ ທີ່ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕ່ຳກວ່າມາດຕະຖານ (ກຸ່ມ C) ຫລື ໜີ້ສົງໄສ (ກຸ່ມ D) ຫລື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ("NPL").

ທະນາຄານຍັງໄດ້ນຳໃຊ້ຂໍ້ຕົກລົງ ເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ແລະ ຄຳແນະນຳການຈັດຕັ້ງປະຕິບັດ ເລກທີ 249/ທຫລ ລົງວັນທີ 11 ພຶດສະພາ 2020 ອອກໂດຍ ທຫລ ກ່ຽວກັບການປັບປຸງໂຄງສ້າງເງິນກູ້, ການຕໍ່ສັນຍາ ແລະ ການຮັກສາການຈັດຊັ້ນໜີ້ເປັນກຸ່ມ ເພື່ອຊ່ວຍເຫຼືອຜູ້ກູ້ຢືມ ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງເຊື້ອໂຄວິດ 19. ດັ່ງນັ້ນ, ທະນາຄານຈຶ່ງໄດ້ປັບປຸງໂຄງສ້າງເງິນກູ້ ທີ່ມີຄຸນສົມບັດທີ່ຄົບຖ້ວນ ແລະ ຍັງຮັກສາຊັ້ນໜີ້ເປັນກຸ່ມເກົ່າກ່ອນວັນທີ 01 ມັງກອນ 2020.

ເງິນແຮ

ອີງຕາມຂໍ້ຕົກລົງ ທຫລ 512 ແລະ ຄຳແນະນຳຈັດຕັ້ງປະຕິບັດ ເລກທີ 898, ທະນາຄານຕ້ອງໄດ້ສ້າງເງິນແຮ ໂດຍອີງຕາມການຈັດຊັ້ນໜີ້ຂອງແຕ່ລະກຸ່ມດັ່ງຕໍ່ໄປນີ້:

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.9 ການຈັດຊຶ້ນໜີ້ ແລະ ເງິນຮັບສຳລັບກິດຈະກຳສິນເຊື່ອ (ຕໍ່)

ເງິນຮັບ (ຕໍ່)

ກຸ່ມ	*ອັດຕາເງິນຮັບ*	*ປະເພດຄ້ຳເງິນຮັບ (i)*	*ການບັນຊີສຳລັບຍອດເຫຼືອເງິນຮັບ (ii)*	*ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນຮັບ (iii)*
ເງິນກູ້ທີ່ເກີດດອກອອກຜົນ				
A	0.5%	ຄ້ຳເງິນຮັບທົ່ວໄປ	ໃນສ່ວນທຶນເຈົ້າຂອງ	ລາຍຈ່າຍ/ລາຍຮັບອື່ນ
B	3.0%	ເງິນຮັບສະເພາະ	ຫັກຈາກຍອດເຫຼືອເງິນກູ້	ລາຍຈ່າຍ/ລາຍຮັບອື່ນ
ເງິນກູ້ທີ່ບໍ່ເກີດດອກອອກຜົນ				
C	20.0%	ເງິນຮັບສະເພາະ	ຫັກຈາກຍອດເຫຼືອເງິນກູ້	ເງິນຮັບສຸດທິສຳລັບ ໜີ້ NPL
D	50.0%	ເງິນຮັບສະເພາະ	ຫັກຈາກຍອດເຫຼືອເງິນກູ້	ເງິນຮັບສຸດທິສຳລັບ ໜີ້ NPL
E	100.0%	ເງິນຮັບສະເພາະ	ຫັກຈາກຍອດເຫຼືອເງິນກູ້	ເງິນຮັບສຸດທິສຳລັບ ໜີ້ NPL

(i) ມູນຄ່າເງິນຮັບແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ລຸ່ມນີ້:

a. ເງິນຮັບທົ່ວໄປ = ອັດຕາເງິນຮັບ x ຍອດເຫຼືອເງິນກູ້

b. ເງິນຮັບສະເພາະ = ອັດຕາເງິນຮັບ x (ຍອດເຫຼືອເງິນກູ້ - ມູນຄ່າສ່ວນຫຼຸດຂອງຫຼັກຊັບຄ້ຳປະກັນ)

ທະນາຄານສາມາດເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່ເງິນຮັບ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ທຫລ 512 ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898.

(i) ຍອດເຫຼືອເງິນຮັບສຳລັບ*ເງິນກູ້ທີ່ເກີດດອກອອກຜົນ ທີ່ຖືກຈັດໃນກຸ່ມ A* ໄດ້ຖືກບັນທຶກໃນໃບລາຍງານຖານະການເງິນ ຢູ່ "*ເງິນຮັບທົ່ວໄປສຳລັບກິດຈະກຳສິນເຊື່ອ*" ພາຍໃຕ້ທຶນ ແລະ ຄ້ຳສຳຮອງຂອງທະນາຄານ.

ຍອດເຫຼືອສະສົມຂອງເງິນຮັບສຳລັບ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແລະ *ເງິນກູ້ທີ່ເກີດດອກອອກຜົນ ທີ່ຖືກຈັດເປັນກຸ່ມ B* ໄດ້ຖືກບັນທຶກໃນໃບລາຍງານຖານະການເງິນ ຢູ່ *"ເງິນກູ້ໃຫ້ແກ່ລູກຄ້າ, ຫັກເງິນຮັບສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".*

(ii) ການປ່ຽນແປງເງິນຮັບສຳລັບ*ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ *"ລາຍຈ່າຍຈາກການດຳເນີນງານອື່ນໆ"* ສຳລັບລາຍຈ່າຍເງິນຮັບ ແລະ *"ລາຍຮັບຈາກການດຳເນີນງານອື່ນໆ"* ສຳລັບການເກັບຄືນລາຍຈ່າຍເງິນຮັບ.

ການປ່ຽນແປງເງິນຮັບສຳລັບ*ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ *"ລາຍຈ່າຍ/(ເກັບຄືນ) ເງິນຮັບສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".*

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.10 ຫຼັກຊັບປະເພດມີໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບທີ່ມີໄວ້ເພື່ອຂາຍລວມມີການສ່ວນທຶນ ເຊິ່ງທະນາຄານມີຄວາມປະສົງຖືໄວ້ເພື່ອລົງທຶນ ແລະ ກຽມພ້ອມເພື່ອການຄ້າ. ຫຼັກຊັບດັ່ງກ່າວບໍ່ໄດ້ມີການຊື້ຂາຍເປັນປະຈຳ ແຕ່ສາມາດຂາຍໄດ້ທຸກເວລາເມື່ອທຸລະກຳກໍ່ໃຫ້ເກີດຜົນປະໂຫຍດ.

ຫຼັກຊັບທີ່ມີໄວ້ເພື່ອຂາຍໃນເບື້ອງຕົ້ນ ແມ່ນຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ກໍ່ຈະສືບຕໍ່ຮັບຮູ້ຕາມມູນຄ່າຕົ້ນທຶນຫັກລົບຄ່າເສື່ອມ (ຖ້າມີ).

ຫຼັກຊັບມີໄວ້ເພື່ອຂາຍແມ່ນມີການທົບທວນຄືນການເສື່ອມມູນຄ່າເປັນແຕ່ລະໄລຍະ. ຄັ້ງແຮກຄ່າເສື່ອມຂອງຫຼັກຊັບເຫຼົ່ານີ້ສ້າງຂຶ້ນກໍ່ຕໍ່ເມື່ອເຫັນວ່າມູນຄ່າຍຸຕິທຳຕ່ຳລົງ ກວ່າມູນຄ່າເດີມເປັນຈຳນວນຫຼາຍ ແລະ ເປັນເວລາຕໍ່ເນື່ອງ. ຄັ້ງແຮກຄ່າເສື່ອມມູນຄ່າແມ່ນໄດ້ຖືກຮັບຮູ້ເປັນ *"ກຳໄລ/(ຂາດທຶນ) ສຸດທິ ຈາກການລົງທຶນໃນຫຼັກຊັບ"* ໃນໃບລາຍງານຜົນການດຳເນີນງານ.

2.11 ຫຼັກຊັບຖືໄວ້ຄົບກຳນົດ

ການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ ແມ່ນຫຼັກຊັບປະເພດໜີ້ທີ່ມີກຳນົດການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້, ເຊິ່ງທາງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດເພື່ອໃຫ້ໄດ້ລາຍຮັບຈາກດອກເບ້ຍ. ເມື່ອຫຼັກຊັບດັ່ງກ່າວຖືກຂາຍກ່ອນວັນຄົບກຳນົດແມ່ນຈະໄດ້ຖືກຈັດປະເພດຄືນໃໝ່ເປັນ ຫຼັກຊັບປະເພດມີໄວ້ເພື່ອຄ້າ ຫຼື ຫຼັກຊັບປະເພດມີໄວ້ເພື່ອຂາຍ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດໃນເບື້ອງຕົ້ນ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ກໍ່ຈະສືບຕໍ່ຮັບຮູ້ຕາມມູນຄ່າຕົ້ນທຶນໃນປີຕໍ່ໄປ. ສ່ວນເກີນ ແລະ ສ່ວນຫຼຸດທີ່ເກີດຈາກການຈັດຊື້ຫຼັກຊັບແມ່ນຖືກແບ່ງສ່ວນເຂົ້າ ໃນໃບລາຍງານຜົນການດຳເນີນງານ ເຊິ່ງນຳໃຊ້ແບບວິທີສະເໜີຕົວຕາມໄລຍະເວລາຈາກມື້ທີ່ຊື້ຫາມື້ທີ່ຄົບກຳນົດ.

ຫຼັກຊັບມີໄວ້ເພື່ອຂາຍແມ່ນມີການທົບທວນຄືນການເສື່ອມມູນຄ່າເປັນແຕ່ລະໄລຍະ. ຄັ້ງແຮກຄ່າເສື່ອມຂອງຫຼັກຊັບເຫຼົ່ານີ້ສ້າງຂຶ້ນກໍ່ຕໍ່ເມື່ອມີຄວາມສຳຄັນ ຫຼື ເມື່ອເຫັນວ່າມູນຄ່າຍຸຕິທຳຕ່ຳກວ່າມູນຄ່າເດີມເປັນເວລາຕໍ່ເນື່ອງ. ຄັ້ງແຮກຄ່າເສື່ອມມູນຄ່າແມ່ນໄດ້ຖືກຮັບຮູ້ເປັນ *"ກຳໄລ/(ຂາດທຶນ) ສຸດທິ ຈາກການລົງທຶນໃນຫຼັກຊັບ"* ໃນໃບລາຍງານຜົນການດຳເນີນງານ.

2.12 ຊັບສິນບັດຖືທີ່

ຊັບສິນບັດຖືທີ່ລວມມີ ຊັບສິນບັດຖືທີ່ມີຕົວຕົນ ແລະ ຊັບສິນບັດຖືທີ່ບໍ່ມີຕົວຕົນ. ຊັບສິນບັດຖືທີ່ມີຕົວຕົນ ປະກອບມີ ອາຄານ ແລະ ການປັບປຸງອາຄານ, ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ ແລະ ເຄື່ອງຕິດຕັ້ງ, ແລະ ພາຫະນະ. ຊັບສິນບັດຖືທີ່ບໍ່ມີຕົວຕົນປະກອບມີ ສິດນຳໃຊ້ທີ່ດິນ ແລະ ຊອບແວຄອມພິວເຕີ.

ຊັບສິນບັດຖືທີ່ ແມ່ນສະແດງຕາມມູນຄ່າຕົ້ນທຶນ. ຕົ້ນທຶນຂອງຊັບສິນບັດໂດຍປະກອບດ້ວຍ ມູນຄ່າຊື້ບວກກັບ ຄ່າໃຊ້ຈ່າຍທີ່ຕິດພັນເພື່ອການເຮັດໃຫ້ຊັບສິນບັດຖືທີ່ສາມາດນຳໃຊ້ໄດ້.

ຫຼັງຈາກການຮັບຮູ້ຕົ້ນທຶນ:

- ຊັບສິນບັດຖືທີ່ສາມາດວັດແທກມູນຄ່າຍຸຕິທຳຕ້ອງມີການດຳເນີນການຕີມູນຄ່າຄືນໃໝ່ເປັນມູນຄ່າຍຸຕິທຳ ນະວັນທີມີການຕີມູນຄ່າຄືນໃໝ່ຫັກດ້ວຍຄ່າຫຼ້ຍຫຽ້ນສະສົມ ແລະ ຂາດທຶນຈາກຄ່າເສື່ອມສະສົມ. ເມື່ອມູນຄ່າຍຸຕິທຳຂອງຊັບສິນທີ່ຕີລາຄາຄືນໃໝ່ນັ້ນມີຄວາມແຕກຕ່າງຫລາຍຈາກມູນຄ່າຕາມບັນຊີ. ຈຳເປັນຕ້ອງມີການຕີມູນຄ່າໃໝ່ເພີ່ມເຕີມ. ເມື່ອລາຍການຂອງຊັບສິນບັດຖືທີ່ຖືກຕີມູນຄ່າໃໝ່, ມູນຄ່າຕາມບັນຊີຂອງຊັບສິນນັ້ນຈະຖືກດັດແກ້ເປັນມູນຄ່າທີ່ຕີໃໝ່.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.12 ຊັບສິນບັດຄົງທີ່ (ຕໍ່)

- ຖ້າມູນຄ່າຕາມບັນຊີຂອງຊັບສິນເພີ່ມຂຶ້ນຍ້ອນການຕີມູນຄ່າຄືນໃໝ່, ການເພີ່ມຂຶ້ນແມ່ນຖືກຮັບຮູ້ໃນ "ຄັງສຳຮອງໃນການຕີມູນຄ່າ", ແລະ ຖ້າໃນເວລາຊັບສິນຫຼຸດລົງຍ້ອນການຕີມູນຄ່າຄືນໃໝ່, ການຫຼຸດລົງຈະຖືກຮັບຮູ້ເປັນ ກຳໄລ ຫຼື ຂາດທຶນ.

- "ຄັງສຳຮອງໃນການຕີມູນຄ່າ" ລວມຢູ່ໃນສ່ວນຂອງທຶນກ່ຽວກັບລາຍການຊັບສິນຄົງທີ່ ທີ່ອາດຈະຖືກໂອນໂດຍກົງເປັນ ກຳໄລສະສົມ, ໂດຍບໍ່ບັນທຶກຜ່ານບັນຊີ ກຳໄລ ຫຼື ຂາດທຶນ, ເມື່ອຊັບສິນຖືກຢຸດການຮັບຮູ້.

  ຊັບສິນບັດຄົງທີອື່ນໆທີ່ລະບຸໃນພາຍຫຼັງຕາມມູນຄ່າຕົ້ນທຶນຫັກຄ່າຫຼ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ, ຖ້າມີ.

  ລາຍຈ່າຍເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸແມ່ນບັນທຶກເປັນຊັບສິນ ແລະ ລາຍຈ່າຍກ່ຽວກັບການບຳລຸງຮັກສາ ແລະ ສ້ອມແປງແມ່ນບັນທຶກເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນການດຳເນີນງານ.

  ເມື່ອຊັບສິນບັດຖືກຂາຍ ຫຼື ສະສາງ, ມູນຄ່າຕາມບັນຊີຈະຖືກສະສາງຈາກໃບລາຍງານຖານະທາງການເງິນ ແລະ ກຳໄລ ຫຼື ຂາດທຶນ ທີ່ມາຈາກການສະສາງອອກແມ່ນບັນທຶກໃນໃບລາຍງານຜົນການດຳເນີນງານ.

2.13 ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່

ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ແມ່ນ ຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົ້ນໃນອັດຕາທີ່ກຳນົດໃຊ້ຕໍ່ການຄາດຄະເນອາຍຸການນຳໃຊ້ຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍ ວ່ອຍສາອາກອນຂອງ ສປປ ລາວ ເລກທີ 67/ ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງຈາກ ວັນທີ 01 ມັງກອນ 2020 ອອກໂດຍປະທານ ສະພາແຫ່ງຊາດ, ອັດຕາການຄິດໄລ່ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີມີດັ່ງຕໍ່ໄປນີ້:

ຄອມພິວເຕີຊອບແວ	20%
ສິດນຳໃຊ້ທີ່ດິນກັບອາຍຸການນຳໃຊ້ທີ່ບໍ່ຈຳກັດ	ບໍ່ມີການຫັກຄ່າເສື່ອມມູນຄ່າ
ຊັບສິນບັດຄົງທີ່ບໍ່ມີຕົວຕົນອື່ນໆ	20%
ອາຄານ ແລະ ການປັບປຸງ	5%
ເຄື່ອງໃຊ້ຫ້ອງການ	20%
ເຟີນີເຈີ ແລະ ສິ່ງຕິດຕັ້ງ	20%
ພາຫະນະ	20%

2.14 ການເຊົ່າ (ນຳໃຊ້ຕັ້ງແຕ່ ວັນທີ 01 ມັງກອນ 2020)

2.14.1 ສິດນຳໃຊ້ຊັບສິນ

ໃນມື້ເລີ່ມຕົ້ນຂອງສັນຍາ, ທະນາຄານຈະປະເມີນວ່າສັນຍາເປັນ, ຫຼື ປະກອບດ້ວຍອົງປະກອບຂອງການເຊົ່າບໍ່ນັ້ນ ແມ່ນອີງຕາມ ການພິຈາລະນາສັນຍາທີ່ບົ່ງບອກເຖິງການເປັນຜູ້ນຳໃຊ້ (ຜູ້ເຊົ່າ) ສິດໃນການຄວບຄຸມການນຳໃຊ້ຊັບສິນ ທີ່ລະບຸໃນຊ່ວງໄລຍະ ເວລາໃດໜຶ່ງໃນການແລກປ່ຽນກັບຄ່າຕອບແທນ. ຫາກສັນຍາມີອົງປະກອບການເຊົ່າຫຼາຍກວ່າໜຶ່ງອົງປະກອບ ຫຼື ປະສົມ ປະສານທຸລະກຳການເຊົ່າ ແລະ ການບໍ່ມີການ ຈະຖືກພິຈາລະນາໃຫ້ແບ່ງອອກເປັນສ່ວນຕາມແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ທີ່ບໍ່ແມ່ນອົງປະກອບຂອງສັນຍາເຊົ່າໂດຍສະຫຼຸບ ແລະ ຕີລາຄາຂອງສັນຍາຄືນໃໝ່ທຸກຄັ້ງຕາມພື້ນຖານລາຄາຊື້ຂາຍ ສິນຄ້າລາຍການດຽວ. ສາຂາລວມເອົາສ່ວນປະກອບຂອງສັນຍາເຊົ່າ ແລະ ທີ່ບໍ່ແມ່ນສັນຍາເຊົ່າເຂົ້າກັນໃນກໍລະນີທີ່ບໍ່ສາມາດ ແຍກສ່ວນປະກອບທີ່ບໍ່ແມ່ນສັນຍາເຊົ່າໄດ້

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.14 ການເຊົ່າ (ນຳໃຊ້ໄດ້ຕັ້ງແຕ່ ວັນທີ 01 ມັງກອນ 2020) (ຕໍ່)

2.14.1 ສິດນຳໃຊ້ຊັບສິນ (ຕໍ່)

ທະນາຄານຮັບຮູ້ສິດໃນການນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ຕິດພັນສາມາດນຳໃຊ້ໄດ້). ສິດນຳໃຊ້ຊັບສິນແມ່ນຖືກວັດແທກຕາມຕົ້ນທຶນ, ລົບໃຫ້ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມສະສົມ, ແລະ ດັດແກ້ສຳລັບການຕີມູນຄ່າຄືນໃໝ່ຂອງໜີ້ສິນທີ່ເປັນການເຊົ່າ. ຕົ້ນທຶນຂອງສິດໃນການນຳໃຊ້ຊັບສິນລວມມີ ມູນຄ່າໜີ້ຕ້ອງສົ່ງສັນຍາເຊົ່າດັດແກ້ສຳລັບ ການຊຳລະສະສາງທີ່ເກີດຂຶ້ນນະມື້ ຫຼື ກ່ອນວັນທີເລີ່ມຕົ້ນຂອງການເຊົ່າ, ບວກບັນດາລາຍຈ່າຍຕົ້ນທຶນທາງກົງທີ່ເກີດຂຶ້ນ ແລະ ລາຍຈ່າຍຄາດຄະເນທີ່ຈະຮື້ຖອນ ແລະ ເຄື່ອນຍ້າຍຊັບສິນອື່ນໆພາຍໃຕ້ສັນຍາເຊົ່າ ຫຼື ການຕິດຕັ້ງຄືນບັນດາຊັບສິນ ຫຼື ສະຖານທີທີ່ຕັ້ງຢູ່ ນັ້ນ, ລົບສ່ວນຫຼຸດການເຊົ່າທີ່ໄດ້ຮັບ. ໄລຍະເວລາການເຊົ່າ ລວມເຖິງທາງເລືອກຂອງໄລຍະການຕໍ່ສັນຍາຖ້າມີຄວາມແນ່ນອນທີ່ສົມເຫດສົມຜົນໃນການທີ່ຈະປະຕິບັດທາງເລືອກນັ້ນ. ນອກຈາກວ່າ ທະນາຄານລວບລວມສິດຄວາມເປັນເຈົ້າຂອງທີ່ແນ່ນອນຂອງຊັບສິນຈາກສັນຍາເຊົ່າໄດ້ຢ່າງສົມເຫດສົມຜົນໃນມື້ສິ້ນສຸດໄລຍະເວລາເຊົ່າ, ການຮັບຮູ້ສິດນຳໃຊ້ຊັບສິນ ແມ່ນຈະຫັກຄ່າຫຼ້ຍຫ້ຽນແບບເສັ້ນຊື່ຕາມອາຍຸການໃຊ້ງານ ແລະ ອາຍຸສັນຍາຄ່າເຊົ່າ. ສິດນຳໃຊ້ຊັບສິນແມ່ນຈະຕ້ອງໄດ້ຮັບການປະເມີນຄ່າເສື່ອມມູນຄ່າ.

2.14.2 ໜີ້ສິນໃຫ້ເຊົ່າ

ນະວັນທີເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ໜີ້ສິນການເຊົ່າທີ່ຖືກວັດແທກເປັນມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າທີ່ຕ້ອງຈ່າຍຕະຫຼອດໄລຍະສັນຍາເຊົ່າ. ການຈ່າຍຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ລວມທັງການຈ່າຍຄ່າເຊົ່າທີ່ມີເນື້ອຫາເປັນການຈ່າຍຄົງທີ່) ລົບສ່ວນຫຼຸດທີ່ຕ້ອງຮັບ, ການຈ່າຍຄ່າເຊົ່າທີ່ປ່ຽນແປງທີ່ຂຶ້ນກັບດັດສະນີ ຫລື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າ ຍັງລວມມີລາຄາທີ່ໃຊ້ໃນທາງເລືອກຂອງການຊື້ທີ່ແນ່ນອນຢ່າງສົມເຫດສົມຜົນວ່າ ຈະປະຕິບັດໂດຍທະນາຄານ ແລະ ການຈ່າຍຄ່າປັບໃໝສຳລັບການຍຸດຕິການເຊົ່າ, ຖ້າວ່າສັນຍາເຊົ່າສະທ້ອນໃຫ້ເຫັນວ່າສາຂາໃຊ້ທາງເລືອກໃນການຍຸດຕິການເຊົ່າ. ການຈ່າຍຄ່າເຊົ່າທີ່ປ່ຽນແປງໂດຍບໍ່ຂຶ້ນກັບດັດສະນີ ຫຼື ອັດຕາຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະທີ່ເຫດການ ຫຼື ສະພາບການທີ່ກໍ່ໃຫ້ເກີດການຈ່າຍເກີດຂຶ້ນ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າ, ທະນາຄານນຳໃຊ້ອັດຕາສ່ວນເພີ່ມຂອງການກູ້ຢືມນະມື້ເລີ່ມຕົ້ນຂອງສັນຍາເຊົ່າ ຖ້າອັດຕາດອກເບ້ຍສ່ວນຫຼຸດສັນຍາເຊົ່າບໍ່ສາມາດກຳນົດໄດ້. ຫຼັງຈາກມື້ເລີ່ມຕົ້ນຂອງສັນຍາເຊົ່າ, ມູນຄ່າໜີ້ສິນຕາມສັນຍາເຊົ່າ ແມ່ນເພີ່ມຂຶ້ນເພື່ອສະທ້ອນເຖິງດອກເບ້ຍ ແລະ ສ່ວນຫຼຸດລົງສຳລັບການຊຳລະຄ່າເຊົ່າ. ນອກຈາກນີ້, ມູນຄ່າຕາມບັນຊີ ຂອງໜີ້ສິນຕາມສັນຍາເຊົ່າ ແມ່ນໄດ້ຮັບການຕີມູນຄ່າຄືນໃໝ່ຖ້າມີການປ່ຽນແປງໃດໜຶ່ງ ເຊັ່ນການປ່ຽນແປງຂອງໄລຍະເວລາການເຊົ່າ, ການປ່ຽນແປງໃນເນື້ອໃນເງື່ອນໄຂການຊຳລະ ຫຼື ປ່ຽນແປງໃນການປະເມີນເພື່ອຊື້ບັນດາຊັບສິນດັ່ງກ່າວ.

2.14.3 ການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນມູນຄ່າຕ່ຳ

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນ ທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າຈາກວັນທີເລີ່ມຕົ້ນຂອງການເຊົ່າ ແລະ ບໍ່ລະບຸທາງເລືອກໃນການຊື້. ພ້ອມທັງນຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າຊັບສິນມູນຄ່າຕ່ຳຂອງຊັບສິນທີ່ພິຈະລະນາວ່າມີມູນຄ່າຕ່ຳ. ການຊຳລະຄ່າເຊົ່າຂອງສັນຍາເຊົ່າໄລຍະສັ້ນ ແລະ ຊັບສິນທີ່ມີມູນຄ່າຕ່ຳ ແມ່ນຮັບຮູ້ເປັນລາຍຈ່າຍແບບເສັ້ນຊື່ຕະຫຼອດໄລຍະສັນຍາເຊົ່າ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.14 ການເຊົ່າ (ນຳໃຊ້ໄດ້ຕັ້ງແຕ່ ວັນທີ 01 ມັງກອນ 2020) (ຕໍ່)

2.14.4 ການຕັດສິນໃຈທີ່ສຳຄັນໃນການກຳນົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່

ທະນາຄານກຳນົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກຂອງການເຊົ່າ, ລວມທັງໄລຍະເວລາຂອງທາງເລືອກໃນການຕໍ່ສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະເລືອກທາງເລືອກນີ້ ຫຼື ໄລຍະເວລາຂອງທາງເລືອກໃນການຍຸດຕິສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະບໍ່ເລືອກທາງນີ້.

ທະນາຄານນຳໃຊ້ການຕັດສິນໃຈໃນການປະເມີນວ່າ ມີຄວາມສົມເຫດສົມຜົນແນ່ນອນທີ່ຈະດຳເນີນການຕໍ່ສັນຍາຄືນໃໝ່ຫຼືບໍ່. ການຕັດສິນໃຈແມ່ນພິຈາລະນາປັດໃຈທີ່ກ່ຽວຂ້ອງທັງໝົດທີ່ກໍ່ໃຫ້ເກີດການຈູງໃຈທາງເສດຖະກິດ ສຳລັບການດຳເນີນການຕໍ່ສັນຍາຄືນໃໝ່. ຫຼັງຈາກວັນທີເລີ່ມຕົ້ນ, ທະນາຄານປະເມີນເງື່ອນໄຂການເຊົ່າຄືນໃໝ່ ຖ້າມີເຫດການທີ່ສຳຄັນພາຍໃນການຄວບຄຸມ ແລະ ກະທົບຕໍ່ຄວາມສາມາດທີ່ຈະດຳເນີນ (ຫຼື ບໍ່ດຳເນີນ) ການຕໍ່ສັນຍາຄືນໃໝ່ (ຕົວຢ່າງ ການປ່ຽນແປງທາງຍຸດທະສາດຂອງທຸລະກິດ).

2.15 ການເຊົ່າ (ນຳໃຊ້ກ່ອນວັນທີ 1 ມັງກອນ 2020)

ການກຳນົດວ່າຂໍ້ຕົກລົງແມ່ນການເຊົ່າຫຼືບໍ່ ຫຼື ປະກອບມີການເຊົ່າ ແມ່ນອີງຕາມເນື້ອໃນຂອງຂໍ້ຕົກລົງ ແລະ ຈຳຕ້ອງມີການປະເມີນວ່າມີຂໍ້ຕົກລົງຄົບຖ້ວນຫຼືບໍ່ ແມ່ນອີງຕາມການນຳໃຊ້ຂອງຊັບສິນສະເພາະໃດໜຶ່ງ ຫຼື ຊັບສິນ ແລະ ຂໍ້ຕົກລົງທີ່ເປັນສິດນຳໃຊ້ຊັບສິນ.

ທະນາຄານໃນຖານະຜູ້ເຊົ່າ

ການເຊົ່າ, ທີ່ທຸກຄວາມສ່ຽງ ແລະ ຜົນປະໂຫຍດຂອງຄວາມເປັນເຈົ້າຂອງລາຍການການເຊົ່າ ບໍ່ຖືກໂອນໄປຍັງທະນາຄານແມ່ນການເຊົ່າໃນການດຳເນີນງານ. ການຊຳລະຄ່າເຊົ່າໃນການດຳເນີນງານ ແມ່ນຮັບຮູ້ເປັນລາຍຈ່າຍໃນ ກຳໄລ ຫຼື ຂາດທຶນ ຕາມແບບເສັ້ນຊື່ຕະຫຼອດອາຍຸຂອງສັນຍາເຊົ່າ. ໜີ້ຕ້ອງສິ່ງຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຮັບຮູ້ເປັນລາຍຈ່າຍໃນຊ່ວງໄລຍະທີ່ລາຍການນັ້ນເກີດຂຶ້ນ.

2.16 ຄັງສຳຮອງຕາມລະບຽບການ

ພາຍໃຕ້ຂໍ້ກຳນົດຂອງກົດໝາຍ ວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ບັນດາທະນາຄານທຸລະກິດ ຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສະສົມເງິນດັ່ງລຸ່ມນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມກົດລະບຽບຕາມ ມາດຕາ 156, ກົດໝາຍທຸລະກິດລົງວັນທີ 26 ທັນວາ 2013, ທະນາຄານແມ່ນໄດ້ຖືກຮຽກຮ້ອງໃຫ້ແບ່ງປັນຜົນກຳໄລ 10% ຫຼັງຈາກເສຍອາກອນແຕ່ລະປີເຂົ້າໃນຄັງສະສົມຕາມລະບຽບການ. ເມື່ອຄັງດັ່ງກ່າວນີ້ເຖິງ 50% ຂອງທຶນຈົດທະບຽນ, ທະນາຄານອາດຈະຢຸດຫັກເງິນແຮກໄດ້, ເວັ້ນເສຍແຕ່ໄດ້ ກຳນົດໄວ້ໃນລະບຽບກົດໝາຍ.

ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຄວນຖືກສ້າງຂຶ້ນພາຍໃຕ້ການຕົກລົງຂອງສະພາອຳນວຍການ. .

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.16 ຄ້ຳສຳຮອງຕາມລະບຽບການ (ຕໍ່)

ສະນັ້ນ, ທະນາຄານໄດ້ອະນຸມັດໃຫ້ມີຄ້ຳສຳຮອງ ສຳລັບປີ 2020 ດັ່ງນີ້:

	% ຂອງລາຍຮັບຫຼັງອາກອນ
ຄ້ຳສະສົມຕາມລະບຽບການ	10% ຂອງລາຍຮັບຫຼັງອາກອນ ໃນປີ 2020
ຄ້ຳຂະຫຍາຍທຸລະກິດ	5% ຂອງລາຍຮັບຫຼັງອາກອນ ໃນປີ 2020

2.17 ການເຄື່ອນໄຫວເປັນສະກຸນເງິນຕ່າງປະເທດ

ທະນາຄານໄດ້ປະຕິບັດຕາມລະບຽບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ, ລາຍຮັບ ແລະ ລາຍຈ່າຍທີ່ເກີດຂຶ້ນເປັນເງິນຕ່າງປະເທດພາຍໃນປີແມ່ນຖືກປ່ຽນຄ່າເປັນສະກຸນເງິນກີບທຸກໆມື້ ໂດຍໃຊ້ອັດຕາແລກປ່ຽນປະຈຳວັນໂດຍສະເພາະ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນອື່ນນອກເໜືອຈາກລາວກີບໃນທ້າຍປີໄດ້ຖືກຕີມູນຄ່າເປັນເງິນກີບ ຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະການເງິນ. ສ່ວນຜິດຕ່ຳງຈາກການແປງຄ່າຊັບສິນ ແລະ ໜີ້ສິນທາງການເງິນໃນມື້ສ້າງໃບລາຍງານຖານະການເງິນແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ. ລາຍລະອຽດອັດຕາແລກປ່ຽນເງິນຕ່າງປະເທດທຽບໃສ່ເງິນກີບໃນ ວັນທີ 31 ທັນວາ 2020, ແລະ ວັນທີ 31 ທັນວາ 2019 ແມ່ນໄດ້ນຳສະເໜີດັ່ງລຸ່ມນີ້:

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ໂດລາ ສະຫະລັດ ("ໂດລາ")	9,251.00	8,843.00
ໄທ ບາດ ("ບາດ")	326.18	297.91

2.18 ອາກອນກຳໄລ

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນໄລຍະປັດຈຸບັນ, ເຊິ່ງອີງຕາມກົດໝາຍວ່ອຍສາອາກອນ ຂອງ ສປປ ລາວ. ທະນາຄານມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 (2019:24%) ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020. ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມີໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.19 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດພາຍຫຼັງອອກການ

ຜົນປະໂຫຍດຫຼັງອອກການ ຈະຈ່າຍໃຫ້ກັບພະນັກງານບຳນານຂອງທະນາຄານໂດຍກອງທຶນປະກັນສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານຈຳເປັນຕ້ອງມີສ່ວນຮ່ວມໃນການຈ່າຍຜົນປະໂຫຍດໃຫ້ແກ່ພະນັກງານຫຼັງອອກການ ໂດຍຈ່າຍເບ້ຍປະກັນສັງຄົມໃນອັດຕາ 6.00% ຕໍ່ປີຂອງເງິນເດືອນພື້ນຖານພະນັກງານລາຍເດືອນ. ນອກເໜືອຈາກນີ້ແລ້ວທະນາຄານບໍ່ມີພາລະຜູກພັນເພີ່ມເຕີມກ່ຽວກັບຜົນຜະໂຫຍດພະນັກງານຫຼັງອອກການ.

ຜົນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານເລກທີ 43/ສພຊ ລົງນາມໂດຍປະທານປະເທດແຫ່ງ ສປປ ລາວ ວັນທີ 28 ມັງກອນ 2014, ທະນາຄານມີພັນທະຕ້ອງຈ່າຍເງິນຊົດເຊີຍໃຫ້ກັບພະນັກງານທີ່ຖືກຍົກເລີກການວ່າຈ້າງ ໃນກໍລະນີດັ່ງລຸ່ມນີ້:

- ຜູ້ເຮັດວຽກຂາດທັກສະສະເພາະດ້ານ ຫຼື ສຸຂະພາບບໍ່ພ້ອມ ແລະ ບໍ່ສາມາດປະຕິບັດໜ້າທີ່ຕໍ່ໄປໄດ້;
- ຜູ້ວ່າຈ້າງເຫັນວ່າຈຳເປັນຕ້ອງຫຼຸດຈຳນວນແຮງງານເພື່ອປັບປຸງວຽກພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ທະນາຄານຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກເລີກຈ້າງໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2020, ບໍ່ມີພະນັກງານຖືກເລີກຈ້າງຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ທະນາຄານຈຶ່ງບໍ່ໄດ້ສ້າງຄັ້ງແຮສຳລັບການຍົກເລີກສັນຍາຈ້າງນີ້ໃນເອກະສານລາຍງານການເງິນຂອງທະນາຄານ.

3. ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

	2020 ກີບ	2019 ກີບ
ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ ຈາກ:		
ທຸລະກຳລະຫວ່າງທະນາຄານ	165,484,809	922,543,223
ເງິນກູ້ໃຫ້ແກ່ລູກຄ້າ	327,946,203,286	235,068,531,029
ພັນທະບັດອອກໂດຍ ກະຊວງການເງິນ	1,620,142,727	2,392,689,765
	329,731,830,822	**238,383,764,017**
ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ ສຳລັບ:		
ເງິນຝາກຈາກທະນາຄານອື່ນ	(10,309,767,382)	(4,107,051,441)
ເງິນຝາກຂອງລູກຄ້າ	(249,293,490,330)	(180,045,237,779)
	(259,603,257,712)	(184,152,289,220)
ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	**70,128,573,110**	**54,231,474,797**

4. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

	2020 ກີບ	2019 ກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ຈາກ:		
ທຸລະກຳກັບທະນາຄານ	848,531,120	1,041,437,428
ການຊື້ຂາຍດ້ານການເງິນ, ATM ແລະ ກິດຈະກຳການໂອນເງິນ	137,249,820,745	94,887,836,857
ບໍລິການຊຳລະສະສາງ	3,133,810,003	3,321,074,196
	141,232,161,868	**99,250,348,481**
ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່າບໍລິການ ສຳລັບ:		
ບໍລິການຊຳລະສະສາງ	(1,374,565,804)	(1,169,723,028)
ທຸລະກຳກັບທະນາຄານ	(8,059,687,576)	(8,037,537,148)
	(9,434,253,380)	**(9,207,260,176)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**131,797,908,488**	**90,043,088,305**

5. (ຂາດທຶນ)/ກຳໄລສຸດທິຈາກການລົງທຶນໃນຫຼັກຊັບ

	2020 ກີບ	2019 ກີບ
ເງິນປັນຜົນ ແລະ ທຽບເທົ່າລາຍຮັບອື່ນໆ	**100,000,000**	**160,000,000**
ເງິນປັນຜົນຈາກຫຸ້ນ EDL-Gen	100,000,000	160,000,000
ກຳໄລຈາກການຊື້ຫຼຸດພັນທະບັດ	**-**	**5,142,666,667**
ພັນທະບັດຫຼຸດລາຄາ	-	5,142,666,667
ເງິນເຫຼື່ອມລຳລັບຫຼັກຊັບມີໄວ້ເພື່ອຂາຍ	**(1,030,000,000)**	**(920,000,000)**
	(930,000,000)	**4,382,666,667**

6. ລາຍຮັບອື່ນໆຈາກການດຳເນີນງານ

	2020 ກີບ	2019 ກີບ
ເກັບຄືນດອກເບ້ຍຄ້າງຈ່າຍ ແລະ ລາຍຈ່າຍ	194,659,498	191,028,126
ເກັບຄືນໜີ້ເສຍທີ່ໄດ້ລ້າງອອກ	5,511,334,019	59
ລາຍຮັບຈາກການສະສາງຊັບສິນບັດຄົງທີ່	119,333,456	6,926,000
ອື່ນໆ	2,662,225,847	1,983,429,903
	8,487,552,820	**2,181,384,088**

7. ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ

	2020 ກີບ	2019 ກີບ
ເງິນເດືອນ ແລະ ເງິນອຸດໜູນ	45,020,674,410	41,364,585,899
ລາຍຈ່າຍປະກັນສັງຄົມສຳລັບພະນັກງານ	1,700,720,226	1,451,088,219
ໂບນັດ ແລະ ສະຫວັດດີການ	971,162,431	435,788,000
ລາຍຈ່າຍເບ້ຍບຳນານ	426,510,755	281,610,742
ລາຍຈ່າຍໃນການຝຶກອົບຮົມ	32,800,000	26,371,900
ອື່ນໆ	178,394,308	141,358,000
	48,330,262,130	**43,700,802,760**

8. ກຳໄລສຸດທິຈາກການຊື້-ຂາຍເງິນຕາຕ່າງປະເທດ

	2020 ກີບ	2019 ກີບ
ກຳໄລຈາກການຊື້-ຂາຍເງິນຕາຕ່າງປະເທດ	1,400,455,632,314	1,282,818,802,312
ຂາດທຶນຈາກການຊື້-ຂາຍເງິນຕາຕ່າງປະເທດ	(1,373,940,527,673)	(1,270,691,781,638)
	26,515,104,641	**12,127,020,674**

9. ລາຍຈ່າຍບໍລິຫານອື່ນໆ

	2020 ກີບ	2019 ກີບ
ຄ່າທຳນຽມນາຍໜ້າ ແລະ ທີ່ປຶກສາ	449,260,715	491,435,329
ຄ່ານ້ຳມັນ	1,075,195,010	1,162,778,466
ລາຍຈ່າຍໃນການເດີນທາງ	3,251,066,921	2,621,717,098
ລາຍຈ່າຍຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	2,674,437,412	3,314,892,917
ລາຍຈ່າຍທົ່ວໄປ ແລະ ບໍລິຫານ	2,996,092,185	1,950,974,522
ຄ່າປະກັນໄພ	444,682,129	470,014,031
ຄ່າໄປສະນີ ແລະ ໂທລະຄົມມະນາຄົມ	3,141,440,011	3,188,352,943
ຄ່າສ້ອມແປງ ແລະ ບຳລຸງຮັກສາ	9,143,675,524	6,578,176,416
ຄ່າໄຟຟ້າ ແລະ ນ້ຳປະປາ	2,514,826,021	2,598,790,248
ຄ່າເຊົ່າຫ້ອງການ	6,931,738,488	5,648,719,957
ຄ່າບັນເທີງ	2,158,079,117	2,778,644,256
ອື່ນໆ	11,989,525,371	8,539,752,623
	46,770,018,904	**39,344,248,806**

10. ລາຍຈ່າຍດຳເນີນງານອື່ນໆ

	2020 ກີບ	2019 ກີບ
ລາຍຈ່າຍກອງທຶນປົກປ້ອງຜູ້ຝາກເງິນ	5,022,187,671	2,597,815,798
ລາຍຈ່າຍເງິນແຮສຸດທີສຳລັບເງິນກູ້ທີ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 15.2)*	6,342,858,278	2,143,538,877
ອື່ນໆ	1,403,204,660	100,000
	12,768,250,609	**4,741,454,675**

11. ເງິນສົດໃນຄັງ

	31/12/2020 ກີບ	31/12/2019 ກີບ
ເງິນສົດໃນຄັງ ທີ່ເປັນສະກຸນເງິນກີບ	572,664,806,300	145,262,859,332
ເງິນສົດໃນຄັງ ທີ່ເປັນສະກຸນເງິນຕາຕ່າງປະເທດ	148,050,601,500	250,030,830,786
	720,715,407,800	**395,293,690,118**

12. ຍອດເຫຼືອຢູ່ ທຫລ

	31/12/2020 *ກີບ*	*31/12/2019* *ກີບ*
ເງິນຝາກກະແສລາຍວັນ	1,249,788,829,841	286,116,660,434
ເງິນຝາກແຮບັງຄັບ (i)	215,713,454,930	188,427,440,995
ເງິນຝາກສຳລັບທຶນຈົດທະບຽນ (ii)	5,915,000	5,915,000
	1,465,508,199,771	**474,550,016,429**

ຍອດເຫຼືອຢູ່ທະນາຄານແຫ່ງ ສປປ ລາວ ລວມມີ ເງິນຝາກກະແສລາຍວັນ, ເງິນຝາກແຮບັງຄັບ ແລະ ເງິນຝາກສຳລັບທຶນຈົດທະບຽນແມ່ນບໍ່ມີດອກເບ້ຍ.

(i) ຕາມຂໍ້ກຳນົດຂອງ ທຫລ, ທະນາຄານໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ໃນອັດຕາ 4.00% ສຳລັບສະກຸນເງິນກີບ ແລະ 8.00% ສຳລັບສະກຸນເງິນຕາຕ່າງປະເທດ (2019: 5.00% ແລະ 10.00%), ໃນທຸກໆ 2 ອາທິດຕໍ່ຄັ້ງ ຂອງຍອດເງິນຝາກລູກຄ້າທີ່ມີໄລຍະກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີທະນາຄານໄດ້ຮັກສາເງິນຝາກແຮບັງຄັບເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ.

(ii) ຕາມດຳລັດ ເລກທີ 02/ທຫລ, ທະນາຄານທຸລະກິດຈະຕ້ອງຮັກສາຍອດເງິນຂັ້ນຕ່ຳຂອງເງິນຝາກພິເສດໃນ ທຫລ ເຊິ່ງ ແມ່ນເທົ່າກັບ 25% ຂອງທຶນທີ່ຖອກແລ້ວເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການດຳເນີນງານ. ທະນາຄານໄດ້ຮັບ ອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ສະບັບເລກທີ 46/ກຄທ, ລົງວັນທີ 5 ກຸມພາ 2014 ເພື່ອຖອນເງິນຈາກຄັງ ສຳຮອງເພື່ອເພີ່ມເຂົ້າໃນທຶນໝຸນວຽນ. ນະວັນທີ 31 ທັນວາ 2020, ຍອດເຫຼືອຂອງເງິນຝາກພິເສດແມ່ນ 5,915,000 ກີບ.

13. ໜີ້ຕ້ອງຮັບຈາກທະນາຄານອື່ນ

13.1 ເງິນຝາກກະແສລາຍວັນ

	31/12/2020 *ກີບ*	*31/12/2019* *ກີບ*
ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ	**88,477,624,953**	**130,868,155,061**
ທະນາຄານ ພັດທະນາລາວ	9,183,919,215	3,356,217,736
ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ	79,293,698,059	127,511,599,646
ທະນາຄານ ອິນໂດຈີນ ຈຳກັດ	7,679	337,679
ເງິນຝາກກະແສລາຍວັນກັບທະນາຄານຕ່າງປະເທດ	**84,722,578,784**	**73,346,399,396**
ທະນາຄານ ຍູໄນເຕັດ ໂອເວີຊີ	59,277,171,469	55,948,367,360
ທະນາຄານ ກະສິກອນ ມະຫາຊົນ ຈຳກັດ	3,114,487,754	11,911,833,325
ທະນາຄານ ທະນາຊາດ ມະຫາຊົນ ຈຳກັດ	326,180	500,728,055
ທະນາຄານ ຊີໄອເອັມບີໄທ ຈຳກັດ	1,251,280	1,182,210
ກຸ່ມທະນາຄານ ຈີນກໍ່ສ້າງ	99,520,923	84,786,306
ທະນາຄານ ພີເອັນຊີ	1,577,022,133	1,507,470,189
ທະນາຄານ ກຸງເທບ	2,947,589,122	3,392,031,951
ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ	17,705,209,923	-
	173,200,203,737	**204,214,554,457**

13. ໜີ້ຕ້ອງຮັບຈາກທະນາຄານອື່ນ (ຕໍ່)

13.2 *ເງິນຝາກມີກຳນົດ*

	31/12/2020 ກີບ	*31/12/2019 ກີບ*
ທະນາຄານ ລາວຈີນ ຈຳກັດ	18,502,000,000	-
ທະນາຄານ ໄຊ່ງ່ອນເທື່ອງຕິນ ລາວ ຈຳກັດ	-	17,686,000,000
	18,502,000,000	**17,686,000,000**

ເງິນຝາກທະນາຄານຢູ່ທີ່ ທະນາຄານ ລາວຈີນ ຈຳກັດ ໃນສະກຸນເງິນໂດລາສະຫະລັດ, ມີໄລຍະເວລາ 3 ເດືອນ ແລະ ອັດຕາດອກເບ້ຍ 2.9% ຕໍ່ປີ.

13.3 *ເງິນຝາກປະຢັດ*

	31/12/2020 ກີບ	*31/12/2019 ກີບ*
ເງິນຝາກປະຢັດກັບທະນາຄານພາຍໃນປະເທດ	**7,157,739,234**	**2,329,946,413**
ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ	7,157,739,234	2,329,946,413
ເງິນຝາກປະຢັດກັບທະນາຄານຕ່າງປະເທດ	**37,152,984,475**	**36,225,843,860**
ທະນາຄານ ຊີໄອເອັມບີ ໄທ ມະຫາຊົນ ຈຳກັດ	31,236,926,878	25,504,444,712
ທະນາຄານ ຊີໄອເອັມບີ ໄທ ມະຫາຊົນ ຈຳກັດ, ສາຂາຫຼັງສອນ	2,300,636,173	-
ທະນາຄານ ຍູໄນເຕັຊ ໂອເວີຊີ	-	3,434,639,240
ທະນາຄານ ຊີໄອເອັມບີ ໄທ ມະຫາຊົນ ຈຳກັດ	-	1,108,968,480
ທະນາຄານ ຍູໄນເຕັຊ ໂອເວີຊີ ສິງກະໂປ	3,615,421,424	6,177,791,428
	44,310,723,709	**38,555,790,273**

ເງິນຝາກປະຢັດແມ່ນບໍ່ມີກຳນົດ ແລະ ໄດ້ອັດຕາດອກເບ້ຍລະຫວ່າງ 0.5% ຫາ 1.89% ຕໍ່ປີ.

14. ການລົງທຶນໃນຫຼັກຊັບ

	31/12/2020 ກີບ	*31/12/2019 ກີບ*
ຫຼັກຊັບປະເພດມີໄວ້ເພື່ອຂາຍ (i)	2,350,000,000	3,380,000,000
ຫຼັກຊັບຖືໄວ້ຈົນຄົບກຳນົດ (ii)	27,000,000,000	49,870,000,000
	29,350,000,000	**53,250,000,000**

14.1 *ຫຼັກຊັບປະເພດມີໄວ້ເພື່ອຂາຍ*

ລາຍລະອຽດສຳລັບຫຼັກຊັບມີໄວ້ເພື່ອຂາຍ ຄືດັ່ງລຸ່ມນີ້ :

	31/12/2020 ກີບ	*31/12/2019 ກີບ*
ຮຸ້ນຈົດທະບຽນໃນ ບໍລິສັດໄຟຟ້າລາວ ມະຫາຊົນ	4,300,000,000	4,300,000,000
ຄ້ຳຖະສຳລັບຄ່າເສື່ອມມູນຄ່າ	(1,950,000,000)	(920,000,000)
	2,350,000,000	**3,380,000,000**

14. ການລົງທຶນໃນຫຼັກຊັບ (ຕໍ່)

14.1 *ຫຼັກຊັບປະເພດມີໄວ້ເພື່ອຂາຍ* (ຕໍ່)

(i) ຫຼັກຊັບມີໄວ້ເພື່ອຂາຍ ແມ່ນສະແດງເຖິງຮຸ້ນຈຳນວນໜຶ່ງລ້ານຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບຂອງ ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ, ຮຸ້ນເຫຼົ່ານັ້ນມີມູນຄ່າໜ້າບັດແມ່ນ 4,300 ຕໍ່ຮຸ້ນ.

14.2 *ຫຼັກຊັບຖືໄວ້ຄົບກຳນົດ*

(ii) ສະແດງເຖິງພັນທະບັດທີ່ອອກໂດຍກະຊວງການເງິນ. ລາຍລະອຽດພັນທະບັດ ນະວັນທີ 31 ທັນວາ 2020 ມີດັ່ງນີ້:

ວັນທີອອກ	*ມູນຄ່າໜ້າບັດ ກີບ*	*ກຳນົດເວລາ*	*ອັດຕາດອກເບ້ຍ (%ຕໍ່ປີ)*
17 ກໍລະກົດ 2020	15,000,000,000	1 ປີ	5.00%
26 ເມສາ 2020	12,000,000,000	1 ປີ	4.00%
	27,000,000,000		

15. ເງິນກູ້ໃຫ້ແກ່ລູກຄ້າ, ຫັກເງິນແຮສສະເພາະສຳລັບກິດຈະກຳສິນເຊື່ອ

	31/12/2020 ກີບ	*31/12/2019 ກີບ*
ເງິນກູ້ໃຫ້ແກ່ລູກຄ້າ (*ບົດອະທິບາຍເລກທີ 15.1*)	4,600,829,272,369	3,320,993,647,262
ຫັກເງິນແຮສສະເພາະ	(5,313,167,942)	(6,284,572,100)
ໃນນີ້:		
ເງິນແຮສສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ	(3,962,600,132)	*(308,477,961)*
ເງິນແຮສສະເພາະສຳລັບເງິນກູ້ທີ່ຄວນເອົາໃຈໃສ່	(1,350,567,810)	*(5,976,094,139)*
	4,595,516,104,427	**3,314,709,075,162**

15.1 *ເງິນກູ້ໃຫ້ແກ່ລູກຄ້າ*

ວິເຄາະຕາມສະກຸນເງິນ

	31/12/2020 ກີບ	*31/12/2019 ກີບ*
ເງິນກູ້ ເປັນສະກຸນເງິນ ກີບ	1,384,176,201,557	811,363,348,111
ເງິນກູ້ ເປັນສະກຸນເງິນ ໂດລາ	1,792,433,127,851	1,432,651,395,614
ເງິນກູ້ ເປັນສະກຸນເງິນ ບາດ	1,424,219,942,961	1,076,978,903,537
	4,600,829,272,369	**3,320,993,647,262**

ອັດຕາດອກເບ້ຍສຳລັບການປ່ອຍສິນເຊື່ອພາຍໃນປີມີດັ່ງລຸ່ມນີ້:

	2020 *ອັດຕາດອກເບ້ຍ % ຕໍ່ປີ*	2019 *ອັດຕາດອກເບ້ຍ % ຕໍ່ປີ*
ເງິນກູ້ ເປັນສະກຸນເງິນ ກີບ	6.00% - 14.00%	9.00%-14.00%
ເງິນກູ້ ເປັນສະກຸນເງິນ ໂດລາ	6.00% - 13.00%	7.00%-12.00%
ເງິນກູ້ ເປັນສະກຸນເງິນ ບາດ	6.00% - 13.00%	7.00%-12.00%

15. ເງິນກູ້ໃຫ້ແກ່ລູກຄ້າ, ຫັກເງິນແຮສຸດທີສຳລັບກິດຈະກຳສິນເຊື່ອ (ຕໍ່)

15.1 *ເງິນກູ້ໃຫ້ແກ່ລູກຄ້າ* (ຕໍ່)

ວິເຄາະຕາມຄຸນນະພາບ

	31/12/2020 *ກີບ*	*31/12/2019* *ກີບ*
ໜີ້ປົກກະຕິ	4,536,368,618,108	3,297,606,481,040
ໜີ້ຄວນເອົາໃຈໃສ່	45,018,927,000	10,282,598,708
ໜີ້ຕ່ຳກວ່າມາດຕະຖານ	19,337,221,633	4,054,006,840
ໜີ້ສົງໃສ	18,699,128	7,770,535,806
ໜີ້ສູນ	85,806,500	1,280,024,868
	4,600,829,272,369	**3,320,993,647,262**

15.2 *ເງິນແຮສຳລັບການສູນເສຍສິນເຊື່ອ*

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮສຳລັບການສູນເສຍສິນເຊື່ອ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

ການຈັດຊັ້ນໜີ້	*ຍອດເຫຼືອເງິນກູ້* *ກີບ*	*ເງິນແຮສະເພາະ* *ກີບ*	*ເງິນແຮທົ່ວໄປ* *ກີບ*	*ລວມເງິນແຮ* *ກີບ*
ເງິນກູ້ທີ່ເກີດດອກອອກຜົນ				
- *ໜີ້ປົກກະຕິ*	4,536,368,618,108	-	22,695,329,628	22,695,329,628
- *ໜີ້ຄວນເອົາໃຈໃສ່*	45,018,927,000	1,350,567,810	-	1,350,567,810
ເງິນກູ້ທີ່ບໍ່ເກີດດອກອອກຜົນ				
- *ໜີ້ຕ່ຳກວ່າມາດຕະຖານ*	19,337,221,633	3,867,444,068	-	3,867,444,068
- *ໜີ້ສົງໃສ*	18,699,128	9,349,564	-	9,349,564
- *ໜີ້ສູນ*	85,806,500	85,806,500	-	85,806,500
ລວມ	**4,600,829,272,369**	**5,313,167,942**	**22,695,329,628**	**28,008,497,570**

15. ເງິນກູ້ໃຫ້ກັບລູກຄ້າ, ຫັກເງິນແຮສຸດທີ່ສຳລັບກິດຈະກຳສິນເຊື່ອ (ຕໍ່)

15.2 ເງິນແຮສຳລັບການສູນເສຍສິນເຊື່ອ (ຕໍ່)

ການເຄື່ອນໄຫວຂອງເງິນແຮສຳລັບການສູນເສຍສິນເຊື່ອຂອງທະນາຄານພາຍໃນປີ 2020 ມີດັ່ງລຸ່ມນີ້:

	ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ກີບ	*ເງິນແຮສະເພາະສຳລັບເງິນກູ້ທີ່ຄວນເອົາໃຈໃສ່ ກີບ*	*ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ກີບ*	*ລວມ ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2020	5,976,094,139	308,477,961	16,488,032,405	22,772,604,505
ລາຍຈ່າຍເງິນແຮ/(ເກັບຄືນ) ພາຍໃນປີ	(2,076,211,390)	953,116,279	5,389,741,999	4,266,646,888
ສ່ວນຕ່າງຈາກເງິນຕາຕ່າງປະເທດ	62,717,383	88,973,570	817,555,224	969,246,177
ຍອດເຫຼືອນະວັນທີ 31 ທັນວາ 2020	**3,962,600,132**	**1,350,567,810**	**22,695,329,628**	**28,008,497,570**

16. ການລົງທຶນໃນບໍລິສັດຮ່ວມທຶນ

	31/12/2020		31/12/2019	
	ມູນຄ່າຕາມບັນຊີ ກີບ	*ເປັນເຈົ້າຂອງ %*	*ມູນຄ່າຕາມບັນຊີ ກີບ*	*ເປັນເຈົ້າຂອງ %*
ການລົງທຶນໃນບໍລິສັດຮ່ວມທຶນ				
ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ (*)	854,440,000	5%	514,440,000	5%
	854,440,000		**514,440,000**	

(*) ໃນປີ 2019, ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ (LAPNet) ແມ່ນບໍລິສັດໜຶ່ງທີ່ສ້າງຕັ້ງໃນ ສປປ ລາວ ພາຍໃຕ້ໃບທະບຽນວິສັຫະກິດ ເລກທີ 0349 ອອກໂດຍ ກົມຄຸ້ມຄອງທະບຽນ ແລະ ຄຸ້ມຄອງວິສາຫະກິດຂອງກະຊວງອຸດສະຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ລົງວັນທີ 12 ມີນາ 2019. LAPNet ເປັນການຮ່ວມມືລະຫວ່າງທະນາຄານແຫ່ງ ສປປ ລາວ, Union Pay International, ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານ ການຄ້າ ຕ່າງປະເທດລາວ ມະຫາຊົນ, ທະນາຄານລາວ-ຫວຽດ, ທະນາຄານເອັສທີ ແລະ ທະນາຄານເພື່ອການລົງທຶນ ແລະ ທະນາຄານ. ອີງຕາມແຈ້ງການສະບັບ ເລກທີ 014/LAPNet ລົງວັນທີ 12 ມີນາ 2020, ທະນາຄານຍັງໄດ້ປະກອບສ່ວນເພີ່ມທຶນ 340,000,000 ກີບ ເຊິ່ງເປັນການປະກອບທຶນຂອງທະນາຄານໃນບໍລິສັດນີ້ເພີ່ມຂຶ້ນເປັນ 854,440,000 ກີບ ນະວັນທີ 31 ທັນວາ 2020.

17. ຊັບສິນບັດຄົງທີ່

17.1 ຊັບສິນບັດຄົງທີ່ພວມກໍ່ສ້າງ

	2020 ກີບ	*2019 ກີບ*
ຍອດເຫຼືອ ນະວັນທີ 1 ມັງກອນ	**1,183,081,956**	**7,559,538,223**
- ເພີ່ມໃນປີ	10,028,290,264	16,911,552,728
- ໂອນເປັນຊັບສິນບັດຄົງທີ່	(7,471,500,559)	(23,288,008,995)
- ສ່ວນທີ່ຫຼຸດລົງອື່ນໆ	(988,714,148)	-
ຍອດເຫຼືອ ນະວັນທີ 31 ທັນວາ	**2,751,157,513**	**1,183,081,956**

17. ຊັບສິນບັດຄີງທີ່ (ຕໍ່)

17.2 ຊັບສິນບັດຄີງທີ່ບໍ່ມີຕົວຕົນ

	ສິດນຳໃຊ້ທີ່ດິນ ກີບ	*ຄອມພິວເຕີຊໍ້ອບແວ ກີບ*	*ລວມ ກີບ*
ຕົ້ນທຶນ:			
ນະວັນທີ 1 ມັງກອນ 2020	144,030,331,425	47,387,984,106	191,418,315,531
ຮັບຮູ້ເຂົ້າໃໝ່	4,416,098,242	5,173,606,598	9,589,704,840
ການຈັດປະເພດຄືນໃໝ່	231,380,000	(231,380,000)	-
ຈັດປະເພດໃໝ່ເປັນຊັບສິນຖ້າຂາຍໃນ ປີ 2020	(17,281,797,625)	-	(17,281,797,625)
ນະວັນທີ 31 ທັນວາ 2020	131,396,012,042	52,330,210,704	183,726,222,746
ຄ່າເສື່ອມສະສົມ:			
ນະວັນທີ 1 ມັງກອນ 2020	-	45,753,950,176	45,753,950,176
ຄ່າເສື່ອມພາຍໃນປີ 2020	-	50,279,905	50,279,905
ນະວັນທີ 31 ທັນວາ 2020	-	45,804,230,081	45,804,230,081
ມູນຄ່າທີ່ຍັງເຫຼືອສຸດທິ:			
ນະວັນທີ 1 ມັງກອນ 2020	144,030,331,425	1,634,033,930	145,664,365,355
ນະວັນທີ 31 ທັນວາ 2020	131,396,012,042	6,525,980,623	137,921,992,665

17. ຊັບສິນບັດຄີງທີ່ (ຕໍ່)

17.3 ຊັບສິນບັດຄີງທີ່ມີຕົວຕົນ

	ອາຄານ ແລະ ການປັບປຸງ ກີບ	*ເຄື່ອງໃຊ້ຫ້ອງການ ກີບ*	*ເຟີນີເຈີ ແລະ ສິ່ງຕິດຕັ້ງ ກີບ*	*ພາຫະນະ ກີບ*	*ສິດນຳໃຊ້ທີ່ດິນ ກີບ*	*ລວມທັງໝົດ ກີບ*
ຕົ້ນທຶນ:						
ນະວັນທີ 1 ມັງກອນ 2019	68,489,246,654	45,383,403,073	64,598,598,994	11,566,373,448	-	190,037,622,169
ຜົນກະທົບຂອງການຮັບຮອງ IFRS 16 ນະວັນທີ 1 ມັງກອນ 2020 (ບົດອະທິບາຍ 2.3)	-	-	-	-	14,219,271,621	14,219,271,621
ຮັບຮູ້ເຂົ້າໃໝ່	784,551,258	4,965,279,141	2,020,477,637	-		7,770,308,036
ໂອນຈາກ ຊັບສິນພວມກໍ່ສ້າງ	-	1,223,963,787	6,247,536,772	-		7,471,500,559
ສະສາງອອກ	(869,561,946)	(3,392,440,901)	(6,771,398,117)	(236,523,481)		(11,269,924,445)
ນະວັນທີ 31 ທັນວາ 2020	68,404,235,966	48,180,205,100	66,095,215,286	11,329,849,967	14,219,271,621	208,228,777,940
ຄ່າຫຼ້ຍຫ້ຽນສະສົມ:						
ນະວັນທີ 1 ມັງກອນ 2019	18,873,391,156	35,179,142,969	42,122,676,500	8,796,542,591	-	104,971,753,216
ຄ່າຫຼ້ຍຫ້ຽນພາຍໃນປີ	3,166,656,382	4,814,793,914	8,394,574,308	974,747,768	3,632,978,935	20,983,751,307
ສະສາງອອກ	(472,182,032)	(3,372,405,035)	(6,468,553,185)	(209,555,643)	-	(10,522,695,895)
ນະວັນທີ 31 ທັນວາ 2020	21,567,865,506	36,621,531,848	44,048,697,623	9,561,734,716	3,632,978,935	115,432,808,628
ມູນຄ່າທີ່ຍັງເຫຼືອສຸດທິ:						
ນະວັນທີ 31 ທັນວາ 2019	49,615,855,498	10,204,260,104	22,475,922,494	2,769,830,857	14,219,271,621	85,065,868,953
ນະວັນທີ 31 ທັນວາ 2020	46,836,370,460	11,558,673,252	22,046,517,663	1,768,115,251	10,586,292,686	92,795,969,312

18. ຊັບສິນອື່ນໆ

	31/12/2020 *ກີບ*	*31/12/2019* *ກີບ*
ອາກອນມອບລ່ວງໜ້າ *(ບົດອະທິບາຍ 23)*	1,299,205,393	245,655,813
ເງິນລ່ວງໜ້າສຳລັບບັດເຄຣດິດຂອງຕ່າງປະເທດ	2,769,287,691	9,883,384,229
ເງິນລ່ວງໜ້າໃຫ້ຜູ້ສະໜອງ	2,150,519,009	2,541,105,410
ລາຍຈ່າຍລ່ວງໜ້າລໍຖ້າການແບ່ງສ່ວນ	2,117,668,871	6,733,164,314
ໜີ້ຕ້ອງຮັບຈາກປະຫານ *(ບົດອະທິບາຍ 25)*	4,913,355,909	-
ໜີ້ຕ້ອງຮັບຈາກພະນັກງານ (i)	1,373,751,746	1,326,018,951
ເງິນລ່ວງໜ້າໃຫ້ ຜູ້ຖືຮຸ້ນ ແລະ ເຈົ້າໜ້າທີ່ອາກອນ (ii)	28,896,995,659	29,196,853,103
ຊັບສິນລໍຖ້າຂາຍ (iii)	295,040,563,409	208,274,086,258
ອື່ນໆ (iv)	25,337,620,719	1,524,289,441
	363,898,968,406	**259,724,557,519**

(i) ສະແດງເຖິງມູນຄ່າເງິນຖືກລັກໄລບທີ່ຄ້າງຮັບຈາກພະນັກງານຂອງທະນາຄານ.

(ii) ສະແດງເຖິງຈຳນວນເງິນປັນຜົນຊື່ວຄາວທີ່ມອບລ່ວງໜ້າໃຫ້ເຈົ້າຂອງໂດຍພິຈາລະນາຈາກຜົນໄດ້ຮັບລະຫວ່າງປີ 2015 ແລະ ປີ 2019. ອາກອນກຳໄລທີ່ກ່ຽວຂ້ອງກັບເງິນປັນຜົນໄດ້ຖືກໜັກໄວ້ ແລະ ມອບໃຫ້ແກ່ເຈົ້າໜ້າທີ່ອາກອນ.

(iii) ລວມມີຊັບສິນທີ່ຖືກຍຶດພາຍໃຕ້ຂໍ້ຕົກລົງກັບລູກຄ້າ. ທະນາຄານຍັງບໍ່ໄດ້ໂອນກຳມະສິດຊັບສິນດັ່ງກ່າວແຕ່ບັນທຶກເປັນຊັບສິນລໍຖ້າຂາຍ.

(iv) ຈຳນວນດັ່ງກ່າວແມ່ນຈຳນວນເງິນໂອນທີ່ຍັງບໍ່ທັນສຳເລັດ, ລາຍຈ່າຍລ່ວງໜ້າສຳລັບເຄື່ອງຂຽນ, ຊຸດເຄື່ອງແບບ ແລະ ແຊັກທີ່ໄດ້ສົ່ງຄືນ.

19. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໆ

	31/12/2020 *ກີບ*	*31/12/2019* *ກີບ*
ເງິນຝາກກະແສລາຍວັນ	**1,448,026,948**	**4,313,536,226**
ທະນາຄານ ອິນໂດຈີນ ຈຳກັດ	471,980,958	438,287,583
ທະນາຄານ ພັດທະນາລາວ	143,599,320	137,951,691
ທະນາຄານ ເອັສທີ ຈຳກັດ	310,188,107	191,942,090
ທະນາຄານ ກຸງສີ ເຊົ່າສິນເຊື່ອ ຈຳກັດ	336,936,511	3,345,855,713
ກຸ່ມການລົງທຶນທະນາຄານນານາຊາດ	4,625,500	4,421,500
ບໍລິສັດ ທະນະຊັບ ເຊົ່າສິນເຊື່ອ ແລະ ການເງິນ ຈຳກັດ	177,245,552	191,703,799
ທະນາຄານ ເອຊີລິດາ ລາວ ຈຳກັດ	3,451,000	3,373,850
ເງິນຝາກມີກຳນົດ	**168,360,000,000**	**110,744,000,000**
ທະນາຄານ ອິນໂດຈີນ ຈຳກັດ	75,506,000,000	80,744,000,000
ກອງທຶນປົກປ້ອງຜູ້ຝາກເງິນ	5,000,000,000	10,000,000,000
ທະນາຄານ ຊາຄອມແບ້ງ ລາວ ຈຳກັດ	37,004,000,000	20,000,000,000
ທະນາຄານ ໄຊ່ງ່ອນ-ຮ່າໂນຍ ລາວ ຈຳກັດ	20,000,000,000	-
ບໍລິສັດ ລາວ ໂມບາຍ ມັນນີ້ ຈຳກັດຜູ້ດຽວ	850,000,000	-
ທະນາຄານ ມາຣຸຮານ ເຈແປນ ລາວ ຈຳກັດ	30,000,000,000	-
ເງິນກູ້ຢືມ	**773,300,000,000**	-
ທະນາຄານ ແຫ່ງ ສປປ ລາວ	773,300,000,000	-
	943,108,026,948	**115,057,536,226**

ລາຍລະອຽດຂອງບັນຊີເງິນຝາກມີກຳນົດ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

	31/12/2019 *ກີບ*	*ສະກຸນເງິນ*	*ໄລຍະເວລາ*	*ອັດຕາດອກເບ້ຍ* *%/ຕໍ່ປີ*
ທະນາຄານ ອິນໂດຈີນ ຈຳກັດ	75,506,000,000	ກີບ & ໂດລາ	1 ປີ	4.75 - 5.40%
ກອງທຶນປົກປ້ອງຜູ້ຝາກເງິນ	5,000,000,000	ກີບ	1 ປີ	3.20% - 5.00%
ທະນາຄານ ຊາຄອມແບ້ງ ລາວ ຈຳກັດ	37,004,000,000	ໂດລາ	6 ເດືອນ - 12 ເດືອນ	3.50% - 4.00%
ທະນາຄານ ໄຊ່ງ່ອນ-ຮ່າໂນຍ ລາວ ຈຳກັດ	20,000,000,000	ກີບ	1 ປີ	3.20% - 5.55%
ບໍລິສັດ ລາວ ໂມບາຍ ມັນນີ້ ຈຳກັດຜູ້ດຽວ	850,000,000	ກີບ	6 ເດືອນ	5.59%
ທະນາຄານ ມາຣຸຮານ ເຈແປນ ລາວ ຈຳກັດ	30,000,000,000	ກີບ	6 ເດືອນ	3.50%
	168,360,000,000			

19. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໆ (ຕໍ່)

ລາຍລະອຽດຂອງເງິນກູ້ຢືມ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

	31/12/2019 *ກີບ*	*ສະກຸນເງິນ*	*ໄລຍະເວລາ*	*ອັດຕາດອກເບ້ຍ* *%/ຕໍ່ປີ*
ທະນາຄານ ແຫ່ງ ສປປ ລາວ	773,300,000,000	ກີບ	6 ປີ	3%
	773,300,000,000			

20. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ຍອດເຫຼືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ ນະວັນທີ 31 ທັນວາ 2020 ດັ່ງນີ້:

	ເປັນສະກຸນເງິນ *ກີບ*	*ເປັນສະກຸນເງິນຕາຕ່າງປະເທດ* *ກີບ*	*ລວມທັງໝົດ* *ກີບ*
ເງິນຝາກກະແສລາຍວັນ	86,455,921,229	251,265,573,450	337,721,494,679
ເງິນຝາກປະຢັດ	380,828,190,920	833,651,050,726	1,214,479,241,646
ເງິນຝາກມີກຳນົດ	765,542,448,285	3,627,609,863,545	4,393,152,311,830
ໜີ້ຕ້ອງສົ່ງອື່ນໆ	-	1,850,200	1,850,200
	1,232,826,560,434	**4,712,528,337,921**	**5,945,354,898,355**

ຍອດເຫຼືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ ນະວັນທີ 31 ທັນວາ 2019 ດັ່ງນີ້:

	ເປັນສະກຸນເງິນ *ກີບ*	*ເປັນສະກຸນເງິນຕາຕ່າງປະເທດ* *ກີບ*	*ລວມທັງໝົດ* *ກີບ*
ເງິນຝາກກະແສລາຍວັນ	48,274,194,609	173,148,455,960	221,422,650,569
ເງິນຝາກປະຢັດ	500,303,277,402	569,583,580,604	1,069,886,858,006
ເງິນຝາກມີກຳນົດ	590,156,689,180	2,358,626,498,413	2,948,783,187,593
ໜີ້ຕ້ອງສົ່ງອື່ນໆ	1,547,000	415,621	1,962,621
	1,138,735,708,191	**3,101,358,950,598**	**4,240,094,658,789**

ອັດຕາດອກເບ້ຍຂອງໜີ້ຕ້ອງສົ່ງໃຫ້ລູກຄ້າມີດັ່ງລຸ່ມນີ້:

	2020 *ອັດຕາດອກເບ້ຍຕໍ່ປີ*	*2019* *ອັດຕາດອກເບ້ຍຕໍ່ປີ*
ເງິນຝາກກະແສລາຍວັນ ສະກຸນເງິນກີບ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກກະແສລາຍວັນ ສະກຸນເງິນຕ່າງປະເທດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດ ສະກຸນເງິນກີບ	0.85%-1.89%	0.85%-1.89%
ເງິນຝາກປະຢັດ ສະກຸນເງິນໂດລາ	0.50%-1.50%	0.50%-1.50%
ເງິນຝາກປະຢັດ ສະກຸນເງິນບາດ	0.50%-1.50%	0.50%-1.50%
ເງິນຝາກມີກຳນົດ ສະກຸນເງິນກີບ	1.50%-6.90%	2.50%-14.00%
ເງິນຝາກມີກຳນົດ ສະກຸນເງິນຕ່າງປະເທດ	1.00%-7.75%	1.00%-10.00%

21. ໜີ້ຕ້ອງສົ່ງອື່ນໆ

	31/12/2020 *ກີບ*	*31/12/2019* *ກີບ*
ໜີ້ຕ້ອງສົ່ງໃຫ້ພະນັກງານ	137,792,350	2,098,839,508
ໜີ້ຕ້ອງສົ່ງອາກອນເງິນເດືອນ	521,301,342	10,612,812
ອາກອນຫັກຈາກພາກສ່ວນອື່ນ	1,001,425,563	1,301,283,007
ໜີ້ສິ້ນຈາກການເຊົ່າ	8,676,433,655	-
ອາກອນມູນຄ່າເພີ່ມຄ້າງຈ່າຍ	1,427,816,702	2,400,000,000
ອື່ນໆ (*)	23,548,950,778	19,727,858,398
	35,313,720,390	**25,538,593,725**

(*) ໃນຈຳນວນດັ່ງກ່າວແມ່ນໜີ້ຕ້ອງສົ່ງສຳລັບການຊຳລະສະສາງບັດວີຊ່າ, ໜີ້ຕ້ອງສົ່ງລາຍການເງິນໂອນ ແລະ ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງ ແລະ ເງິນສິດສ່ວນເກີນລໍຖ້າການແກ້ໄຂ.

22. ກຳໄລ/(ຂາດທຶນ) ສະສົມ

	31/12/2020 *ກີບ*	*31/12/2019* *ກີບ*
ກຳໄລສະສົມຈາກການດຳເນີນງານ	71,373,595,904	29,114,337,454
ຂາດທຶນຈາກທຸລະກຳສະກຸນເງິນຕາຕ່າງປະເທດຈາກການເພີ່ມທຶນຈົດທະບຽນ (*)	(39,757,050,000)	(39,757,050,000)
	31,616,545,904	**(10,642,712,546)**

(*) ການຂາດທຶນນີ້ເກີດຈາກການຕີມູນຄ່າເງິນຕາຕ່າງປະເທດຂອງການເພີ່ມທຶນຈົດທະບຽນຂອງທະນາຄານ ນະວັນທີ 31 ມັງກອນ 2010, ເມື່ອ ທຫລ ອອກຂໍ້ຕົກລົງສະບັບທີ 01/ທຫລ ລົງວັນທີ 28 ມັງກອນ 2010 ຊຶ່ງໄດ້ລະບຸໃຫ້ທະນາຄານປ່ຽນທຶນຈົດທະບຽນຈາກສະກຸນເງິນຕ່າງປະເທດເປັນສະກຸນເງິນກີບ ດ້ວຍອັດຕາແລກປ່ຽນຄັ້ງທີ່ ນະວັນທີ 31 ມັງກອນ 2010.

21. ໜີ້ຕ້ອງສົ່ງອື່ນໆ

	31/12/2020 *ກີບ*	*31/12/2019* *ກີບ*
ໜີ້ຕ້ອງສົ່ງໃຫ້ພະນັກງານ	137,792,350	2,098,839,508
ໜີ້ຕ້ອງສົ່ງອາກອນເງິນເດືອນ	521,301,342	10,612,812
ອາກອນຫັກຈາກພາກສ່ວນອື່ນ	1,001,425,563	1,301,283,007
ໜີ້ສິ້ນຈາກການເຊົ່າ	8,676,433,655	-
ອາກອນມູນຄ່າເພີ່ມຄ້າງຈ່າຍ	1,427,816,702	2,400,000,000
ອື່ນໆ (*)	23,548,950,778	19,727,858,398
	35,313,720,390	**25,538,593,725**

(*) ໃນຈຳນວນດັ່ງກ່າວແມ່ນໜີ້ຕ້ອງສົ່ງສຳລັບການຊຳລະສະສາງບັດເອີຊ່ຳ, ໜີ້ຕ້ອງສົ່ງລາຍການເງິນໂອນ ແລະ ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງ ແລະ ເງິນສິດສ່ວນເກີນລໍຖ້າການແກ້ໄຂ.

22. ກຳໄລ/(ຂາດທຶນ) ສະສົມ

	31/12/2020 *ກີບ*	*31/12/2019* *ກີບ*
ກຳໄລສະສົມຈາກການດຳເນີນງານ	71,373,595,904	29,114,337,454
ຂາດທຶນຈາກຫຸລະກຳສະກຸນເງິນຕາຕ່າງປະເທດຈາກການເພີ່ມ ທຶນຈົດທະບຽນ (*)	(39,757,050,000)	(39,757,050,000)
	31,616,545,904	**(10,642,712,546)**

(*) ການຂາດທຶນນີ້ເກີດຈາກການຕີມູນຄ່າເງິນຕາຕ່າງປະເທດຂອງການເພີ່ມທຶນຈົດທະບຽນຂອງທະນາຄານ ນະວັນທີ 31 ມັງກອນ 2010, ເມື່ອ ທຫລ ອອກຂໍ້ຕົກລົງສະບັບທີ 01/ທຫລ ລົງວັນທີ 28 ມັງກອນ 2010 ຊຶ່ງໄດ້ລະບຸໃຫ້ທະນາຄານປ່ຽນທຶນຈົດທະບຽນຈາກສະກຸນເງິນຕ່າງປະເທດເປັນສະກຸນເງິນກີບ ດ້ວຍອັດຕາແລກປ່ຽນຄັ້ງທີ່ ນະວັນທີ 31 ມັງກອນ 2010.

23. ອາກອນ

23.1 ອາກອນກຳໄລ

ອີງຕາມກົດໝາຍອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ທີ່ມີຜົນບັງຄັບໃຊ້ໃນ ຫຼື ຫຼັງວັນທີ 1 ມັງກອນ 2020, ທະນາຄານນຳໃຊ້ອັດຕາ 20% ຂອງກຳໄລກ່ອນອາກອນ. ອາກອນກຳໄລໃນ ປີ 2020 ແມ່ນຄິດໄລ່ດັ່ງນີ້:

	2020 *ກີບ*	*2019* *ກີບ*
ກຳໄລກ່ອນອາກອນພາຍໃນປີ	109,172,787,594	51,157,480,885
ບວກ:		
- ລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຈ່າຍ	3,602,013,924	6,480,832,441
ລົບ:		
- ລາຍຮັບເງິນປັນຜົນ	(100,000,000)	(160,000,000)
ກຳໄລທາງອາກອນ	112,674,801,518	57,478,313,326
ອາກອນກຳໄລໃນອັດຕາ 20% ຂອງກຳໄລທາງອາກອນທັງໝົດ (2019: 24%)	**22,534,960,304**	**11,495,662,665**
ເພີ່ມຕື່ມຂອງອາກອນກຳໄລປີຜ່ານມາ ດັດແກ້ໂດຍເຈົ້າໜ້າທີ່		
ສ່ວຍສາອາກອນ	954,113,818	-
ລາຍຈ່າຍອາກອນທັງໝົດ	**23,489,074,122**	**11,495,662,665**
ໜີ້ຕ້ອງສົ່ງອາກອນກຳໄລຕົ້ນປີ	(245,655,813)	2,592,741,948
ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ	(24,542,623,702)	(14,334,060,426)
ອາກອນມອບລ່ວງໜ້າໃນທ້າຍປີ	**(1,299,205,393)**	**(245,655,813)**

ການແຈ້ງເສຍອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນຳໃຊ້ກົດໝາຍ ສ່ວນອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ. ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

23.2 ໜີ້ສິນທີ່ອາດເກີດຂຶ້ນ

ນະວັນທີ 6 ພະຈິກ 2019, ກະຊວງການເງິນໄດ້ອອກແຈ້ງການເລກທີ 4475/ກງ ຮຽກຮ້ອງໃຫ້ທະນາຄານທຸລະກິດຄິດໄລ່ອາກອນກຳໄລຄືນໃໝ່ສຳລັບປີ 2016 ເຖິງ 2019 ເຊິ່ງວ່າເງິນແຮສຳລັບການສູນເສຍສິນເຊື່ອຄວນຖືກພິຈາລະນາເປັນລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຈ່າຍ. ທະນາຄານໄດ້ສົ່ງໜັງສືທາງການເລກທີ 033/ທຄຣ. ລົງວັນທີ 21 ມັງກອນ 2020 ເຖິງທະນາຄານແຫ່ງ ສປປ ລາວ ເພື່ອຊອກຫາຄວາມກະຈ່າງແຈ້ງ ແລະ ຄຳແນະນຳອັນລະອຽດເພີ່ມເຕີມໃນການຈັດຕັ້ງປະຕິບັດຕາມແຈ້ງການດັ່ງກ່າວ. ຈົນເຖິງວັນທີໃນເອກະສານລາຍງານຖານະທາງການເງິນ, ທະນາຄານຍັງບໍ່ໄດ້ຮັບຄຳຕອບຈາກກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ແລະ ຜົນກະທົບຂອງບັນຫານີ້ (ຖ້າມີ) ແມ່ນຍັງບໍ່ໄດ້ຖືກກຳນົດ. ສະນັ້ນ, ທະນາຄານບໍ່ໄດ້ບັນທຶກການດັດແກ້ໃດໃນເອກະສານລາຍງານຖານະທາງການເງິນ ສຳລັບປີ 2020.

24. ເງິນສົດ ແລະ ທຽບເທົ່າເງິນສົດ

	31/12/2020 *ກີບ*	*31/12/2019* *ກີບ*
ເງິນສົດໃນຄັງ	720,715,407,800	395,293,690,118
ເງິນຝາກກະແສລາຍວັນຢູ່ ທຫລ	1,249,788,829,841	286,116,660,434
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດຢູ່ທະນາຄານອື່ນ	217,510,927,446	242,770,344,730
	2,188,015,165,087	**924,180,695,282**

25. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍລາຍການທຸລະກຳທັງໝົດທີ່ດຳເນີນງານໂດຍພາກສ່ວນອື່ນໆທີ່ກ່ຽວຂ້ອງກັບທະນາຄານ, ພາກສ່ວນຈະກ່ຽວຂ້ອງກັບທະນາຄານຖ້າວ່າ:

(ກ) ພາກສ່ວນທີ່ທຳໜ້າທີ່ທາງກົງ ຫລື ທາງອ້ອມ ໂດຍຜ່ານຄົນກາງຄົນໜຶ່ງ ຫລື ຫຼາຍຄົນ ດັ່ງລຸ່ມນີ້:
- ຄວບຄຸມ, ຖືກຄວບຄຸມໂດຍ, ຫລື ຢູ່ໃຕ້ການຄວບຄຸມລວມກັບທະນາຄານ (ນີ້ລວມມີທະນາຄານສຳນັກງານໃຫຍ່, ສາຂາ ແລະ ຄຸ່ທະນາຄານ);
- ມີຜົນປະໂຫຍດໃນທະນາຄານ ທີ່ມີອິດທິພົນທີ່ສຳຄັນຕໍ່ທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ.

(ຂ) ພາກສ່ວນທີ່ຮ່ວມລົງທຶນກັບທະນາຄານ;

(ຄ) ພາກສ່ວນທີ່ເປັນສະມະຊິກຄົນສຳຄັນໃນຄະນະບໍລິຫານຂອງທະນາຄານ ຫລື ຂອງທະນາຄານສຳນັກງານໃຫຍ່;

(ງ) ພາກສ່ວນທີ່ເປັນສະມະຊິກຢ່າງໃກ້ຊິດຂອງຄອບຄົວຂອງບຸກຄົນທີ່ໄດ້ອ້າງອີງໃນຂໍ້ (ກ) ຫລື (ຄ);

(ຈ) ພາກສ່ວນທີ່ເປັນທະນາຄານທີ່ຖືກຄວບຄຸມ, ຄວບຄຸມຮ່ວມ ຫລື ມີອິດທິພົນທີ່ສຳຄັນ ຫລື ຜູ້ທີ່ມີສິດໃນການລົງຄະແນນສຽງທີ່ສຳຄັນເຊັ່ນ: ທະນາຄານແຕ່ງຕັ້ງທາງກົງ ຫລື ທາງອ້ອມ, ກັບບຸກຄົນທີ່ລະບຸໃນຂໍ້ (ຄ) ຫລື (ງ); ຫຼື;

(ສ) ພາກສ່ວນທີ່ເປັນຜົນປະໂຫຍດຂອງພະນັກງານໃນທະນາຄານ ຫລື ທະນາຄານອື່ນໆທີ່ກ່ຽວຂ້ອງກັບພາກສ່ວນຂອງທະນາຄານ.

